**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ສຳນັກງານນາຍົກລັດຖະມົນຕີ

ເລກທີ 245/ນຍ.

**ນະຄອນຫຼວງວຽງຈັນ**, ວັນທີ 26.08.2009

# ດຳລັດ

## ວ່າດ້ວຍການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ ສົກປີ 2009-2010

- ອີງຕາມ ກົດໝາຍ ວ່າດ້ວຍລັດຖະບານແຫ່ງ ສປປ ລາວ ສະບັບເລກທີ 02/ສພຊ, ລົງວັນທີ 6/5/2003,
- ອີງຕາມ ກົດໝາຍ ວ່າດ້ວຍງົບປະມານແຫ່ງລັດ ສະບັບເລກທີ 02/ສພຊ, ລົງວັນທີ 26/12/2006,
- ອີງຕາມ ມະຕິກອງປະຊຸມສະໄໝສາມັນເທື່ອທີ 07 ຂອງສະພາແຫ່ງຊາດຊຸດທີ VI, ສະບັບເລກທີ 137/ສພຊ, ລົງວັນທີ 9 ກໍລະກົດ 2009 ວ່າດ້ວຍການຮັບຮອງເອົາບົດສະຫລຸບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ສົກປີ 2008-2009 ແລະແຜນພັດທະນາເສດຖະກິດ-ສັງຄົມ ສົກປີ 2009-2010 ແລະ ສະບັບເລກທີ 138/ສພຊ, ລົງວັນທີ 9 ກໍລະກົດ 2009 ວ່າດ້ວຍການຮັບຮອງເອົາບົດສະຫລຸບ ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ສົກປີ 2008-2009 ແລະ ແຜນງົບປະມານແຫ່ງລັດ ສົກປີ 2009-2010.
- ອີງຕາມ ມະຕິກອງປະຊຸມລັດຖະບານ ປະຈຳເດືອນ 7/2009 (ວັນທີ 27-28/7/2009).

## ນາຍົກລັດຖະມົນຕີ ອອກດຳລັດ:

**ມາດຕາ 1:** ປະກາດໃຊ້ ແລະ ຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ ສົກປີ 2009-2010, ເລີ່ມແຕ່ວັນທີ 01 ຕຸລາ ປີ 2009 ເຖິງວັນທີ 30 ກັນຍາ ປີ 2010 ຢ່າງເປັນເອກະພາບ ໃນຂອບເຂດທົ່ວປະເທດ.

**ມາດຕາ 2:** ແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ ສົກປີ 2009-2010 ແມ່ນແຜນຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງທີ VIII ຂອງພັກ, ມະຕິກອງປະຊຸມສະໄໝສາມັນເທື່ອທີ 07 ຂອງສະພາແຫ່ງຊາດ ຊຸດທີ VI ແລະ ເປັນປີສຸດທ້າຍຂອງແຜນການ 5 ປີ ຄັ້ງທີ VI ໂດຍມີທິດທາງ ແລະ ໜ້າທີ່, ບັນດາຄາດໝາຍຕົ້ນຕໍ ແລະ ການດຸນດ່ຽງໃຫຍ່ ຂອງເສດຖະກິດມະຫາພາກ; ຄາດໝາຍການລຶບລ້າງຄວາມທຸກຍາກ ແລະ ຫຼຸດຜ່ອນການຖາງປ່າເຮັດໄຮ່; ກຳນົດໂຄງປະກອບການພັດທະນາ

ຕາມຂະແໜງການ ແລະ ການພັດທະນາເຂດແຄວ້ນ; ກຳນົດແຜນງານ, ໂຄງການ, ແຜນເງິນ, ແຜນຄົນ, ບັນດາມາດຕະການ ແລະ ວິທີການຕົ້ນຕໍ ເພື່ອຈັດຕັ້ງປະຕິບັດຈຸດໝາຍລວມ, ທິດທາງ ແລະ ຄາດໝາຍສູ້ຊົນ ທີ່ກຳນົດໄວ້ໃນແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VI ( 2006-2010 ) ໂດຍສະເພາະແມ່ນສຸມໃສ່ ການຈັດຕັ້ງຜັນຂະຫຍາຍ 11 ແຜນງານໃຫຍ່ 111 ໂຄງການບູລິມະສິດຂອງລັດຖະບານ.

**ມາດຕາ 3: ຄາດໝາຍສູ້ຊົນດ້ານເສດຖະກິດມະຫາພາກ ໃນສົກປີ 2009-2010 ມີດັ່ງນີ້ :**

- ລວມຍອດຜະລິດຕະພັນພາຍໃນ (GDP) ທຽບໃສ່ສົກປີ 2008-2009 ເພີ່ມຂຶ້ນບໍ່ຫລຸດ 7,5%, ສ້າງມູນຄ່າເພີ່ມຕາມລາຄາໃນປີ 54.100 ຕື້ກີບ, ໃນນັ້ນ:
  - + ຍອດຜະລິດຕະພັນກະສິກຳ-ປ່າໄມ້ ໃຫ້ເພີ່ມຂຶ້ນ 3,0%, ກວມເອົາ 30% ຂອງ GDP;
  - + ຍອດຜະລິດຕະພັນອຸດສາຫະກຳ ໃຫ້ເພີ່ມຂຶ້ນ 13,4%, ກວມເອົາ 27% ຂອງ GDP ແລະ
  - + ຍອດຜະລິດຕະພັນການບໍລິການ ໃຫ້ເພີ່ມຂຶ້ນ 7,2%, ກວມເອົາ 37% ຂອງ GDP (ບໍ່ລວມພາສີຂາເຂົ້າ).
- ເກັບລາຍຮັບເຂົ້າງົບປະມານທັງໝົດໃຫ້ໄດ້ໃນລະດັບ 19,69% ຂອງມູນຄ່າ GDP ໃນນັ້ນ, ລາຍຮັບພາຍໃນເທົ່າກັບ 15% ຂອງມູນຄ່າ GDP. ລາຍຈ່າຍງົບປະມານທັງໝົດ ໃຫ້ຢູ່ໃນລະດັບ 23,05% ຂອງມູນຄ່າ GDP, ການຂາດດຸນງົບປະມານ ຢູ່ໃນລະດັບ 3,36% ຂອງມູນຄ່າ GDP.
- ສູ້ຊົນຮັກສາອັດຕາເງິນເຟີ້ສະເລ່ຍໃຫ້ຢູ່ໃນລະດັບຕົວເລກດຽວ.
- ຄວບຄຸມການເພີ່ມຂຶ້ນຂອງບໍລິມາດເງິນລວມ(M2) ບໍ່ໃຫ້ເກີນ 10% ທຽບໃສ່ປີຜ່ານມາ.
- ສືບຕໍ່ປະຕິບັດນະໂຍບາຍອັດຕາແລກປ່ຽນຕາມກົນໄກຕະຫລາດທີ່ມີການຄຸ້ມຄອງຂອງລັດ, ເຮັດໃຫ້ອັດຕາແລກປ່ຽນມີຄວາມສະຫງົບປົກກະຕິ ເງິນກີບແຂງຄ່າ ຫລື ອ່ອນຄ່າຢູ່ໃນລະຫວ່າງ 5% ທຽບໃສ່ເງິນຕາສະກຸນໂດລາສະຫະລັດ.
- ຊຸກຍູ້ສົ່ງເສີມການລົງທຶນທົ່ວສັງຄົມໃຫ້ໄດ້ປະມານ 30% ຂອງ GDP.

**ມາດຕາ 4: ຄາດໝາຍສູ້ຊົນຕົ້ນຕໍດ້ານເສດຖະກິດ ມີດັ່ງນີ້:**

- ສູ້ຊົນຜະລິດເຂົ້າໃຫ້ໄດ້ 3,3 ລ້ານໂຕນ,
- ສູ້ຊົນຜະລິດກະແສໄຟຟ້າໝົດປີໃຫ້ໄດ້ 7.281,1 ລ້ານກິໂລວັດໂມງ,
- ສູ້ຊົນເຮັດໃຫ້ມູນຄ່າການຜະລິດຂອງຂະແໜງອຸດສາຫະກຳປຸງແຕ່ງບັນລຸ ໃຫ້ໄດ້ 434,23 ຕື້ກີບ,
- ສູ້ຊົນເຮັດໃຫ້ມູນຄ່າການສົ່ງອອກ ບັນລຸໄດ້ 1.046,1 ລ້ານໂດລາ,
- ສູ້ຊົນຂະຫຍາຍຕາໜ່າງໂທລະຄົມອອກສູ້ຊົນນະບົດໃຫ້ກວ້າງຂວາງອອກຕື່ມ, ຍົກສູງຄຸນນະພາບ ແລະ ຂະຫຍາຍການບໍລິການໂທລະສັບທີ່ມີຢູ່ໃນຕົວເມືອງ ລົງສູ່ຂັ້ນບ້ານໃຫ້ໄດ້ 80% ຂອງຈຳນວນບ້ານທັງໝົດ.
- ສູ້ຊົນເຮັດໃຫ້ນັກທ່ອງທ່ຽວເຂົ້າມາປະເທດ ປະມານ 2,0 ລ້ານຄົນ,
- ສູ້ຊົນລຶບລ້າງເນື້ອທີ່ຖາງປ່າເຮັດໄຮ່ເລື່ອນລອຍໃຫ້ໄດ້ຢ່າງສິ້ນເຊີງ.

**ມາດຕາ 5: ຄາດໝາຍສູ້ຊົນຕົ້ນຕໍດ້ານສັງຄົມ ມີດັ່ງນີ້:**

- ສູ້ຊົນເຮັດໃຫ້ອັດຕາເຂົ້າຮຽນລວມ ໃນຊັ້ນອະນຸບານໃຫ້ໄດ້ 22%, ອັດຕາເຂົ້າຮຽນສຸດທິ ຂອງຊັ້ນປະຖົມ 93%, ມັດທະຍົມຕອນຕົ້ນ 64%, ມັດທະຍົມຕອນປາຍ 38%; ເພີ່ມອັດຕາການຮູ້ໜັງສື

ຂອງຜູ້ໃຫຍ່ ອາຍຸ 15 ປີຂຶ້ນໄປໃຫ້ໄດ້ 81%, ໃນນັ້ນ ອັດຕາການຮູ້ໜັງສືໃນເກນອາຍຸ 15-40 ປີ 91% ແລະ ເພີ່ມອັດຕາສ່ວນນັກສຶກສາຕໍ່ປະຊາກອນໃຫ້ໄດ້ 1.572 ຄົນ ຕໍ່ ປະຊາກອນແສນຄົນ.

- ສະໜອງນ້ຳສະອາດແກ່ປະຊາຊົນໃຫ້ໄດ້ 79%, ນຳໃຊ້ວິດຖ່າຍຂອງປະຊາຊົນ ໃຫ້ໄດ້ 59%, ອັດຕາການຊົມໃຊ້ວິດຖ່າຍໃນໂຮງຮຽນ 60%, ສັກຢາກັນພະຍາດເດັກນ້ອຍໃຫ້ໄດ້ 85%, ອັດຕາການຕິດເຊື້ອໄວຣັດ HIV ໃນປະຊາກອນ ໃຫ້ຢູ່ລະດັບຕ່ຳກວ່າ 1%. ສະໜອງຢາປິ່ນປົວ ແລະ ມຸ້ງຍ້ອມຢາ ໃຫ້ປະຊາຊົນໃນເຂດສ່ຽງຕໍ່ໄຂ້ຍຸງ ໃຫ້ກວມ 95% (3,6ລ້ານຄົນ) ເພື່ອເຮັດໃຫ້ອັດຕາການເປັນໄຂ້ຍຸງຫລຸດຜ່ອນໃຫ້ເຫລືອ 1,5 ຕໍ່ 1.000 ຄົນ; ອັດຕາການຂາດທາດລ້ຽງດູສຳລັບເດັກທີ່ມີອາຍຸຕ່ຳກວ່າ 5 ປີ ໃຫ້ຢູ່ໃນລະດັບຕ່ຳກວ່າ 37%; ອັດຕາການຕາຍ ຂອງແມ່ມານໃຫ້ຢູ່ໃນລະດັບ 300 ຄົນ ຕໍ່ເດັກເກີດໃໝ່ 100.000 ຄົນ.
- ຝຶກວິຊາຊີບ ໃຫ້ນັກຮຽນທີ່ຮຽນຈົບ ມໍຕົ້ນ ແລະ ມໍປາຍໃຫ້ໄດ້ 17.700 ຄົນ, ຈັດຫາວຽກເຮັດງານທຳໃຫ້ໄດ້ຫລາຍກວ່າ 176.600 ຄົນ.
- ແກ້ໄຂຄວາມທຸກຍາກຢ່າງມີຈຸດສຸມ ເຮັດໃຫ້ຈຳນວນຄົວເຮືອນທຸກຍາກຫລຸດລົງ ຢ່າງໜ້ອຍ 7.200 ຄົວເຮືອນ, ສ້າງແຜນພັດທະນາກຸ່ມບ້ານໃຫ້ໄດ້ຫລາຍກວ່າ 30 ກຸ່ມບ້ານ ຢູ່ບັນດາເມືອງທຸກຍາກທົ່ວປະເທດ.
- ປັບປຸງຕາໜ່າງຖະແຫຼງຂ່າວ ແລະ ວັດທະນະທຳໃຫ້ດີຂຶ້ນ, ເປັນຕົ້ນແມ່ນ ຂະຫຍາຍລະບົບສົ່ງມວນຊົນລົງສູ່ທ້ອງຖິ່ນ ເພື່ອສະໜອງຂໍ້ມູນຂ່າວສານ, ສາລະຄວາມຮູ້ ແລະ ຄວາມບັນເທີງໃຫ້ກວ້າງຂວາງຂຶ້ນກວ່າເກົ່າ.
- ສູ້ຊົນຮັບປະກັນສະຖຽນລະພາບ ດ້ານການເມືອງ, ສັງຄົມມີຄວາມສະຫງົບ ເປັນລະບຽບຮຽບຮ້ອຍ ມີຄວາມຍຸດຕິທຳ, ແກ້ໄຂປະກົດການຫຍໍ້ທໍ້ໃນສັງຄົມໃຫ້ຫຼຸດລົງ, ປະຕິບັດແນວທາງ ປກຊ-ປກສ ທົ່ວປວງຊົນຮອບດ້ານ, ບູລະນະ ການບໍລິຫານການປົກຄອງ ໃຫ້ເຂັ້ມແຂງ, ມີຄວາມສັກສິດ, ໂປ່ງໃສ ແລະ ວ່ອງໄວ.
- ປະຕິບັດໜ້າທີ່ການເປັນເຈົ້າພາບຈັດງານແຂ່ງຂັນກິລາຊີເກມ 2009, ວັນບຸນໃຫ່ຍຂອງພັກ ແລະ ຂອງຊາດ ໃຫ້ໄດ້ຮັບຜົນດີ ພ້ອມທັງ ຮັບປະກັນຄວາມສະຫງົບ ຄວາມເປັນລະບຽບຮຽບຮ້ອຍໃຫ້ແກ່ງານມະຫາກຳກິລາດັ່ງກ່າວ.
- ສຶກສາ, ຄົ້ນຄວ້າ ແລະ ປ້ອງກັນຜົນກະທົບຂອງສິ່ງແວດລ້ອມຈາກການປ່ຽນແປງຂອງດິນຟ້າອາກາດ.

**ມາດຕາ 6: ໃຫ້ສູ້ຊົນປະຕິບັດແຜນລາຍຮັບ ແລະ ລາຍຈ່າຍງົບປະມານປະຈຳປີ ຕາມຕົວເລກທີ່ສະພາແຫ່ງຊາດໄດ້ຮັບຮອງເອົາ ໃຫ້ປະກົດເປັນຈິງ ຄື :**

6.1 ລາຍຮັບງົບປະມານ.

| | ມູນຄ່າ | | ໂຄງປະກອບ |
|---|---|---|---|
| - ລວມຍອດລາຍຮັບງົບປະມານທັງໝົດ (ລວມທັງທຶນຊ່ວຍເຫລືອລ້າ) | 10.653,05 | ຕື້ກີບ; | 100,00 % |
| ໃນນັ້ນ: | | | |
| ກ. ລາຍຮັບງົບປະມານພາຍໃນ | 8.115,76 | ຕື້ກີບ; | 76,18 % |
| 1) ລາຍຮັບຈາກສ່ວຍສາອາກອນ | 3.947,00 | ຕື້ກີບ; | 37,05 % |

ໃນນັ້ນ:

| | | | | |
|---|---|---|---|---|
| - ລາຍຮັບຂະແໜງສວຍສາອາກອນ | 3.842,00 | ຕື້ກີບ; | 36,06 | % |
| - ລາຍຮັບຈາກທີ່ດິນ(ພາສີ, ຄ່າທຳນຽມ ແລະ ບໍລິການ) | 105,00 | ຕື້ກີບ; | 0,99 | % |
| 2) ລາຍຮັບຈາກພາສີ(ອາກອນ+ຂາເຂົ້າ+ຂາອອກ) | 2.600,00 | ຕື້ກີບ; | 24,41 | % |
| 3) ລາຍຮັບຈາກການຄຸ້ມຄອງລັດວິສາຫະກິດ | 595,00 | ຕື້ກີບ; | 5,59 | % |
| 4) ລາຍຮັບຈາກຊັບສິນຂອງລັດ | 873,76 | ຕື້ກີບ; | 8,20 | % |
| ໃນນັ້ນ: | | | | |
| - ລາຍຮັບຂະແໜງຊັບສິນຂອງລັດ | 705,00 | ຕື້ກີບ | 6,62 | % |
| - ລາຍຮັບຈາກທີ່ດິນ(ທັນດິນເປັນທຶນ,ຄ່າເຊົ່າ,ສຳປະທານ) | 168,76 | ຕື້ກີບ; | 1,58 | % |
| 5) ລາຍຮັບຂາຍໄມ້ | 100,00 | ຕື້ກີບ; | 0,94 | % |
| ຂ. ລາຍຮັບຈາກການຊ່ວຍເຫລືອລ້າ | 2.537,29 | ຕື້ກີບ; | 23,82 | % |
| 1) ຊ່ວຍເຫຼືອລ້າຈາກຕ່າງປະເທດເປັນໂຄງການ | 881,29 | ຕື້ກີບ; | 8,27 | % |
| 2) ຊ່ວຍເຫຼືອຈາກຕ່າງປະເທດບໍ່ຕິດພັນໂຄງການ | 1.456,00 | ຕື້ກີບ; | 13,67 | % |
| 3) ຊ່ວຍເຫຼືອລ້າດັດແກ້ນະຫາພາກ | 200,00 | ຕື້ກີບ; | 1,88 | % |

6.2 ລາຍຈ່າຍງົບປະມານ.

| | | | | |
|---|---|---|---|---|
| - ແຜນລາຍຈ່າຍງົບປະມານທັງໝົດ | 12.470,43 | ຕື້ກີບ | 100,00 | % |
| ໃນນັ້ນ: | | | | |
| 1) ລາຍຈ່າຍເງິນເດືອນ | 2.715,29 | ຕື້ກີບ; | 21,77 | % |
| 2) ລາຍຈ່າຍເງິນອຸດໜູນຕ່າງໆ | 710,12 | ຕື້ກີບ; | 5,69 | % |
| 3) ລາຍຈ່າຍບໍລິຫານ - ຊື້ໃໝ່ | 1.091,91 | ຕື້ກີບ; | 8,76 | % |
| 4) ລາຍຈ່າຍດັດສົມ | 772,85 | ຕື້ກີບ; | 6,20 | % |
| 5) ລາຍຈ່າຍເງິນແຮ ແລະ ອື່ນໆ | 50,00 | ຕື້ກີບ; | 0,40 | % |
| 6) ຄັງສະສົມແຫ່ງລັດ | 160,00 | ຕື້ກີບ; | 1,28 | % |
| 7) ລາຍຈ່າຍປະກອບສ່ວນອົງການຈັດຕັ້ງສາກົນ | 22,95 | ຕື້ກີບ; | 0,18 | % |
| 8) ລາຍຈ່າຍຊຳລະໜີ້ສິນຕ່າງໆ | 1.822,05 | ຕື້ກີບ; | 14,61 | % |
| ໃນນັ້ນ: | | | | |
| • ຈ່າຍຊຳລະໜີ້ສິນຕ່າງປະເທດ | 988,91 | ຕື້ກີບ; | 7,93 | % |
| • ຈ່າຍຊຳລະໜີ້ສິນພາຍໃນ | 650,14 | ຕື້ກີບ; | 5,21 | % |
| • ຈ່າຍຊຳລະຕົ້ນທຶນ+ດອກເບ້ຍເງິນກູ້ໃຫ້ທະນາຄານ | 183,00 | ຕື້ກີບ; | 1,47 | % |
| 9) ລາຍຈ່າຍການລົງທຶນຂອງລັດ | 5.125,27 | ຕື້ກີບ; | 41,10 | % |
| ໃນນັ້ນ: | | | | |
| • ທຶນຊ່ວຍເຫລືອ ແລະ ກູ້ຢືມຈາກຕ່າງປະເທດ | 3.860,27 | ຕື້ກີບ; | 30,96 | % |

- ຈ່າຍລົງທຶນຂອງລັດພາຍໃນ 1.265,00 ຕື້ກີບ; 10,14 %

  ໃນນັ້ນ:

  - ລົງທຶນປົກກະຕິ 1.015,00 ຕື້ກີບ; 8,14 %
  - ກອງທຶນບູລະນະທາງ 150,00 ຕື້ກີບ; 1,20 %
  - ກອງທຶນປູກປ່າ 15,00 ຕື້ກີບ; 0,12 %
  - ໂຄງການບ້ານແດນສະຫ້ອນ 35,00 ຕື້ກີບ; 0,28 %
  - ແຜນງານບູລິມະສິດຕາມສັນຍາ ນໍ້າເທີນ 2 50,00 ຕື້ກີບ; 0,40 %

6.3 ແຫຼ່ງດຸນດ່ຽງງົບປະມານທັງໝົດ 1.817,38 ຕື້ກີບ; 100,00 %

ໃນນັ້ນ:

1). ກູ້ຢືມຈາກຕ່າງປະເທດ 1.522,98 ຕື້ກີບ; 83,80 %

2) ຊ່ວຍເຫລືອຈາກລັດຖະບານຍີ່ປຸ່ນ 85,00 ຕື້ກີບ; 4,68 %

3). ພັນທະບັດຄັງເງິນ 200,00 ຕື້ກີບ; 11,00 %

4). ເງິນບໍາເນັດເກີນແຜນ 05-06 ແລະ 06-07 ທີ່ບໍ່ທັນໄດ້ປະຕິບັດ 9,40 ຕື້ກີບ; 0,52 %

**ມາດຕາ 7: ກ່ຽວກັບການລົງທຶນຂອງລັດ, ໃຫ້ປະຕິບັດດັ່ງນີ້:**

**7.1** ການລົງທຶນຂອງລັດ ສົກປີ 2009-2010 ມີທັງໝົດ 5.125,27 ຕື້ກີບ ເທົ່າກັບ 9,47% ຂອງGDP, ໃນນີ້ ທຶນພາຍໃນຈໍານວນ 1.265 ຕື້ກີບ ແລະທຶນຊ່ວຍເຫລືອລ້າ ແລະກູ້ຢືມຈໍານວນ 3.860,27 ຕື້ກີບ ເພື່ອປະຕິບັດ 3.139 ໂຄງການ. ສໍາລັບທຶນພາຍໃນ ຈໍານວນ 1.265 ຕື້ກີບ ແມ່ນໄດ້ຈັດແບ່ງຕາມບູລິມະສິດ ດັ່ງນີ້: 1). ປະຕິບັດໂຄງການສົມທົບທຶນກັບຕ່າງປະເທດ 413 ໂຄງການ ມູນຄ່າ 95,12 ຕື້ກີບ, 2). ຊໍາລະໜີ້ໂຄງການລົງທຶນຂອງລັດ 311 ໂຄງການ ມູນຄ່າ 124,37 ຕື້ກີບ; 3). ປະຕິບັດໂຄງການສືບຕໍ່ 1.282 ໂຄງການ ມູນຄ່າ 632,11 ຕື້ກີບ ແລະ 4). ປະຕິບັດໂຄງການໃໝ່ 1.133 ໂຄງການ ມູນຄ່າ 413,40 ຕື້ກີບ.

**7.2** ການຈັດຕັ້ງປະຕິບັດແຜນການລົງທຶນຂອງລັດ ສົກປີ 2009-2010 ຕ້ອງປະຕິບັດຕາມດໍາລັດ ເລກທີ 58/ນຍ ຢ່າງເຂັ້ມງວດ; ຫ້າມບໍ່ໃຫ້ຂະແໜງການ ແລະ ທ້ອງຖິ່ນ ປະຕິບັດໂຄງການທີ່ນໍາໃຊ້ທຶນຂອງລັດ ທີ່ບໍ່ນອນໃນແຜນການ ຫລື ເຮັດເກີນແຜນທີ່ສະພາແຫ່ງຊາດອະນຸມັດ, ເປັນຕົ້ນແມ່ນ ໃຫ້ຢຸດຕິການປະຕິບັດໂຄງການກ່ອນ ແລ້ວຈຶ່ງຂຶ້ນແຜນງົບປະມານຊໍາລະຕາມພາຍຫຼັງ. ທຸກອົງການຈັດຕັ້ງທີ່ໄດ້ຮັບການເບີກຈ່າຍ ຈາກງົບປະມານຂອງລັດ ຕ້ອງປະຕິບັດຕາມຮ່ວງລາຍຈ່າຍຂອງແຜນງົບປະມານ ທີ່ສະພາແຫ່ງຊາດ ໄດ້ຮັບຮອງເອົາແລ້ວຢ່າງເຄັ່ງຄັດ; ຖ້າມີການລະເມີດຈະຖືກປະຕິບັດວິໄນຕາມລະບຽບການ ແລະ ລັດຖະບານຈະບໍ່ຮັບຮູ້ ໂຄງການລົງທຶນຂອງລັດທີ່ບໍ່ໄດ້ປະຕິບັດຕາມດໍາລັດເລກທີ 58/ນຍ.

**7.3** ການຄິດໄລ່ ແລະ ປະເມີນມູນຄ່າໂຄງການລົງທຶນຂອງລັດ ຕ້ອງອີງໃສ່ຫຼັກວິຊາການຢ່າງຄັກແນ່, ມີການຢັ້ງຢືນຈາກໜ່ວຍງານວິຊາການຂອງລັດ; ໃຫ້ຈໍາກັດທຸກຮູບການສວຍໂອກາດທີ່ອ້າງໃສ່ການຊໍາລະດ້ວຍເງິນໂອນ ເພື່ອເພີ່ມມູນຄ່າໂຄງການເກີນຄວາມເປັນຈິງ; ຫ້າມທຸກຮູບການປະມູນ, ການຈັດຊື້ ແລະ ການຈັດຈ້າງ ທີ່ປະຕິບັດບໍ່ຖືກຕ້ອງຕາມດໍາລັດເລກທີ 03/ນຍ ລົງວັນທີ 09/01/2004 ວ່າດ້ວຍການປະມູນຈັດຊື້ສິນຄ້າ, ການກໍ່ສ້າງ, ການສ້ອມແປງ ແລະ ການບໍລິການ ດ້ວຍທຶນຂອງລັດ.

7.4 ໃນຂັ້ນຕອນເຈລະຈາ ຮ່າງສັນຍາຮັບເໝົາ ຈັດຊື້-ຈັດຈ້າງ ຂອງໂຄງການລົງທຶນຂອງລັດປະເພດ 1, 2 ແລະ 3 ຕ້ອງໄດ້ໃຫ້ຂະແໜງແຜນການ ແລະ ການລົງທຶນ ແລະ ຂະແໜງການເງິນເຂົ້າຮ່ວມ ຕັ້ງແຕ່ເລີ່ມຕົ້ນ ເພື່ອດຸນດ່ຽງ ແລະ ຈັດສັນແຫຼ່ງທຶນຕາມວຽກງານບູລິມະສິດ ແລະ ຄວາມສາມາດຂອງງົບປະມານ; ພ້ອມກັນນັ້ນ, ທຸກໆສັນຍາຈັດຊື້-ຈັດຈ້າງໂຄງການລົງທຶນຂອງລັດ (ປະເພດ 1, 2 ແລະ3) ຕ້ອງໄດ້ຮັບການເຊັນຢັ້ງຢືນ ຈາກຂະແໜງແຜນການ ແລະ ການລົງທຶນ ຈຶ່ງຖືວ່າໃຊ້ໄດ້.

7.5 ທຸກໆໂຄງການຂອງກະຊວງ-ອົງການ ທີ່ກ່ຽວຂ້ອງກັບວຽກງານພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກທີ່ໄປຈັດຕັ້ງປະຕິບັດຢູ່ທ້ອງຖິ່ນ ຕ້ອງໄດ້ແຈ້ງໃຫ້ອຳນາດການປົກຄອງທ້ອງຖິ່ນ ຮັບຮູ້ ແລະ ໃຫ້ເຂົ້າຮ່ວມໃນການຄຸ້ມຄອງໂຄງການ.

7.6 ອຳນາດການປົກຄອງທ້ອງຖິ່ນ ຕ້ອງໄດ້ປຸກລະດົມປະຊາຊົນ ປະກອບສ່ວນດ້ານທຶນຮອນ, ແຮງງານ ແລະ ວັດສະດຸຂອງທ້ອງຖິ່ນ ເຂົ້າໃສ່ໂຄງການລົງທຶນຂອງລັດຢ່າງຕັ້ງໜ້າ. ໃຫ້ຖືໂຄງການທີ່ມີທຶນສົມທົບ ຂອງປະຊາຊົນນີ້ ເປັນບູລິມະສິດໜຶ່ງສຳລັບການລົງທຶນ.

**ມາດຕາ 8: ກ່ຽວກັບການແກ້ໄຂໜີ້ສິນໃນສົກປີ 2009-2010, ໃຫ້ປະຕິບັດດັ່ງນີ້:**

8.1 ໃຫ້ຄະນະກຳມະການແກ້ໄຂໜີ້ສິນພາຍໃນຂອງລັດຖະບານຂັ້ນສູນກາງ ສືບຕໍ່ເກັບກຳ ແລະ ກວດກາຄວາມຖືກຕ້ອງຂອງໜີ້ສິນທັງໝົດໃຫ້ສຳເລັດ ແລະ ແຍກໃຫ້ເຫັນລະອຽດອັນໃດແມ່ນໜີ້ໂຄງການລົງທຶນຂອງລັດ, ອັນໃດແມ່ນໜີ້ບໍລິຫານ ຫຼື ໜີ້ອື່ນໆ ເພື່ອຈັດເປັນປະເພດໜີ້ສິນ ແລະ ເປັນບູລິມະສິດໃນການແກ້ໄຂ ແລ້ວນຳສະເໜີຕໍ່ລັດຖະບານເພື່ອພິຈາລະນາຕົກລົງ. ພ້ອມກັນນັ້ນ, ກໍໃຫ້ຈັດກອງປະຊຸມຄະນະແກ້ໄຂໜີ້ສິນ ເພື່ອກຳນົດແຫຼ່ງທຶນ ແລະ ຈັດບູລິມະສິດໜີ້ສິນຕ້ອງຊຳລະໃນສົກປີງົບປະມານຕໍ່ໜ້າໃຫ້ຖືກທິດ.

8.2 ສຳລັບໜີ້ສິນໂຄງການນ້ຳຖ້ວມປີ 2008 ພາຍຫຼັງທີ່ຄະນະກຳມະການກວດກາສູນກາງ ຢັ້ງຢືນແລ້ວໃຫ້ຈັດເຂົ້າໃນບັນຊີໜີ້ ຂອງລັດຖະບານ; ສ່ວນການຊຳລະສະສາງ ໂຄງການໃດທີ່ຂຶ້ນກັບສິດຄຸ້ມຄອງຂອງແຂວງ ຫຼື ກະຊວງໃດ ແມ່ນໃຫ້ຈັດເຂົ້າເປັນໜີ້ຂອງແຂວງ ຫຼື ກະຊວງນັ້ນ ເພື່ອຊຳລະໃນປີຕໍ່ໄປ.

8.3 ການແກ້ໄຂໜີ້ໂຄງການລົງທຶນຂອງລັດໃຫ້ປະຕິບັດ ຕາມແຈ້ງການເລກທີ 916/ຄລບ ລົງວັນທີ 2/6/2009 ກ່ຽວກັບທິດທາງແກ້ໄຂໜີ້ສິນ, ຫລັກການ ແລະ ແຫລ່ງທຶນ ຄືດັ່ງນີ້:

+ <u>ດ້ານຫລັກການ:</u> ກ). ການຊຳລະແມ່ນເປັນໄປຕາມຄວາມເປັນເອກະພາບ, ສະເໝີພາບໂດຍເອົາອັດຕາສ່ວນຂອງທຶນ ທີ່ໄດ້ແຕ່ລະປີມາຈັດສັນໃຫ້, ຂ). ແກ້ໄຂໜີ້ສິນຕ້ອງລວມສູນຢູ່ບ່ອນດຽວ ໂດຍຜ່ານຄະນະແກ້ໄຂໜີ້ສິນຂອງລັດຖະບານເປັນຜູ້ຈັດສັນ; ຄ). ສ້າງເປັນຕາຕະລາງເພື່ອດຳເນີນການຊຳລະ ແລະ ຫລີກລ້ຽງ ການຊຳລະໜີ້ຈຳນວນໃຫຍ່ໃນໄລຍະຈັ້ນ, ງ). ບູລິມະສິດຕໍ່ບາງໂຄງການທີ່ລັດເປັນໜີ້ ມີຄື ດັ່ງນີ້: (1). ແກ້ໄຂໃຫ້ຜູ້ລົງທຶນຫລືພາກສ່ວນທີ່ເປັນໜີ້ຍາວນານ, (2). ແກ້ໄຂໃຫ້ຜູ້ລົງທຶນໃສ່ໂຄງການ ທີ່ມີປະສິດທິຜົນທາງດ້ານເສດຖະກິດສູງ ແລະ ໄດ້ຮັບຜົນຕອບແທນໄວ, (3). ຕ້ອງແກ້ໄຂໃຫ້ພາກສ່ວນທຸລະກິດທີ່ມີໜີ້ສິນຫລາຍ, ມີຄວາມຫຍຸ້ງຍາກທາງດ້ານການເງິນໜັກໜ່ວງເພື່ອໃຫ້ພາກສ່ວນດັ່ງກ່າວມີທຶນຮອນສືບຕໍ່ດຳເນີນທຸລະກິດ ແລະ ເຮັດພັນທະຕໍ່ລັດຖະບານ.

+ <u>ດ້ານແຫລ່ງທຶນເພື່ອແກ້ໄຂໜີ້ສິນ:</u> ກ). ຈາກງົບປະມານຂອງລັດ 30% ຂອງທຶນແຕ່ລະພາກສ່ວນໄດ້ຮັບ, ຂ). ເງິນເກີນແຜນລາຍຮັບໃນແຕ່ລະປີ, ຄ). ຫັນໂຄງການທີ່ລັດເປັນໜີ້ໃຫ້ເປັນທຶນໂດຍໃຫ້ເຈົ້າໜີ້ເຂົ້າໄປດຳເນີນກິດຈະການໃນໂຄງການທີ່ເປັນໜີ້ນັ້ນ, ງ). ຫັນຊັບສິນທີ່ດິນເປັນທຶນ, ຫັນເອົາ

ໂຄງການເປັນທຶນ ໂດຍສະເພາະ ໂຄງການຂະໜາດໃຫຍ່ ເຊັ່ນ: ໂຄງການບໍ່ແຮ່ທີ່ໄດ້ສຳຫລວດ ແລະ ອະນຸມັດແລ້ວ.

8.4 ໃຫ້ແຕ່ລະຂະແໜງການ ແລະ ທ້ອງຖິ່ນ ທີ່ມີໜີ້ສິນ ຈັດຕັ້ງປະຕິບັດການຊຳລະໜີ້ໂຄງການລົງທຶນຂອງລັດ ຢ່າງໜ້ອຍ 30% ຂອງງົບປະມານການລົງທຶນ ຢ່າງເຂັ້ມງວດ.

**ມາດຕາ 9: ກ່ຽວກັບການຈັດຕັ້ງຜັນຂະຫຍາຍ 11 ແຜນງານໃຫຍ່ຂອງລັດຖະບານ, ໃຫ້ປະຕິບັດດັ່ງນີ້:**

9.1 ໃຫ້ຂະແໜງການຂັ້ນສູນກາງ ແລະ ທ້ອງຖິ່ນ ອີງໃສ່ແຜນຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຄັ້ງທີ VIII ຂອງພັກ (11 ແຜນງານໃຫຍ່, 111 ໂຄງການຈຸດສຸມຂອງລັດຖະບານ) ໂດຍສຸມໃສ່ 25 ໂຄງການຈຸດສຸມບູລິມະສິດ (ຄັດຈ້ອນຈາກ 111 ໂຄງການຈຸດສຸມ) ທີ່ກຳນົດໃນແຈ້ງການຂອງ ຄະນະເລຂາທິການລັດຖະບານ ສະບັບເລກທີ 791/ຄລບ, ລົງວັນທີ 2/05/2008 ແລະ ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ (2006-2010) ຄົ້ນຄວ້າສ້າງເປັນເອກະສານໂຄງການລະອຽດ ສົ່ງໃຫ້ພາກສ່ວນຮັບຜິດຊອບການປະເມີນຜົນ ເພື່ອດຳເນີນການປະເມີນຄວາມສາມາດເປັນໄປໄດ້ ແລະ ປະສິດທິຜົນຂອງໂຄງການກ່ອນຈະສະເໜີເຖິງພາກສ່ວນທີ່ຮັບຜິດຊອບການສ້າງ ແລະ ຄຸ້ມຄອງແຜນການ ພິຈາລະນາເອົາເຂົ້າແຜນປີ, ໂດຍໃຫ້ປະຕິບັດຕາມຂັ້ນຕອນຂອງດຳລັດ ເລກທີ 58/ນຍ ຢ່າງເຂັ້ມງວດ.

**ມາດຕາ 10: ມອບໃຫ້ກະຊວງແຜນການ ແລະ ການລົງທຶນ ປະຕິບັດດັ່ງນີ້:**

10.1 ປະສານສົມທົບກັບບັນດາກະຊວງ, ອົງການ ແລະ ທ້ອງຖິ່ນ ຄຸ້ມຄອງ, ຕິດຕາມ ແລະ ຊຸກຍູ້ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນການລົງທຶນຂອງລັດ ສົກປີ 2009-2010 ໃຫ້ບັນລຸຕາມຄາດໝາຍ ແລະ ເປັນໄປຕາມດຳລັດ 135/ນຍ ແລະ ດຳລັດ 58/ນຍ ຢ່າງເຂັ້ມງວດ, ຮັບປະກັນການລົງທຶນຂອງລັດ ຈຳນວນ 3.139 ໂຄງການ ລວມເປັນທຶນທັງໝົດ 5.125,27 ຕື້ກີບ, ໃນນັ້ນ ທຶນພາຍໃນ 1.265 ຕື້ກີບ ແລະ ທຶນຕ່າງປະເທດ 3.860,27 ຕື້ກີບ ໃຫ້ມີປະສິດທິຜົນ; ສ້າງລະບອບລະບຽບການປະເມີນໂຄງການ ກ່ອນພິຈາລະນາເອົາເຂົ້າແຜນການລົງທຶນປະຈຳປີ; ສ້າງກຳນົດໝາຍແບ່ງປັນງົບປະມານການລົງທຶນຂອງລັດໃຫ້ສຳເລັດທັນກັບການສ້າງແຜນການ ສົກປີ 2010-2011; ປັບປຸງຮ່າງກົດໝາຍການລົງທຶນຂອງລັດ ເພື່ອນຳຜ່ານສະພາໃຫ້ທັນເວລາ; ເປັນໃຈກາງໃນການຄົ້ນຄວ້າ ສ້າງແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VII.

10.2 ສົມທົບກັບຂະແໜງການທີ່ກ່ຽວຂ້ອງ ແລະ ພາກສ່ວນຕ່າງໆ ຕິດຕາມສະພາບເສດຖະກິດຂອງປະເທດໂດຍສະເພາະແມ່ນຜົນກະທົບຈາກວິກິດການການເງິນຂອງໂລກ ພ້ອມທັງດຳເນີນການຄົ້ນຄວ້າວິທີແກ້ໄຂບັນຫາທີ່ເກີດຂຶ້ນ ເພື່ອລາຍງານ ແລະ ສະເໜີຂໍຄຳເຫັນຈາກລັດຖະບານ.

10.3 ເປັນເຈົ້າການກະກຽມ ຈັດກອງປະຊຸມໂຕະມົນປະຈຳປີ 2009 ແລະ ກອງປະຊຸມໂຕະມົນ ຄັ້ງທີ 10 ໃນປີ 2010 ເພື່ອລະດົມທຶນຮອນ ແລະ ປຶກສາຫາລືກັບຄູ່ຮ່ວມພັດທະນາໃນການຈັດຕັ້ງປະຕິບັດແຜນງານ, ໂຄງການຊ່ວຍເຫຼືອທາງການເພື່ອການພັດທະນາ; ພ້ອມດຽວກັນນັ້ນ, ກໍຕ້ອງຂຶ້ນແຜນຄວາມຕ້ອງການທຶນສົມທົບພາຍໃນ ຕໍ່ແຜນງານ, ໂຄງການຊ່ວຍເຫຼືອດັ່ງກ່າວໃຫ້ແທດເໝາະຕົວຈິງ. ສົມທົບກັບກະຊວງການເງິນ ແລະ ບັນດາຂະແໜງການທີ່ກ່ຽວຂ້ອງ ຄົ້ນຄວ້າກົນໄກປະສານງານໃນການຄຸ້ມຄອງທຶນຊ່ວຍເຫລືອ ແລະ ກູ້ຢືມຈາກຕ່າງປະເທດ ໃຫ້ລວມສູນ ແລະ ໄປເຖິງປະຊາຊົນ, ມີປະສິດທິຜົນ ແລະ ໂປ່ງໃສ.

10.4 ເປັນເຈົ້າການສ້າງດຳລັດ ແລະ ຜັນຂະຫຍາຍກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ຢ່າງທົ່ວເຖິງ; ສົມທົບກັບກະຊວງທີ່ກ່ຽວຂ້ອງ ປັບປຸງກົນໄກການບໍລິການການລົງທຶນປະຕູດຽວ ໃຫ້ມີຄວາມເປັນເອກະພາບ ແລະ ມີປະສິດທິຜົນ, ຮັບປະກັນໃຫ້ການລົງທຶນ ຂອງພາກເອກະຊົນພາຍໃນ ແລະ ຕ່າງປະເທດ ຄຶກຄື້ນ.

10.5 ເປັນໃຈກາງປະສານສົມທົບກັບບັນດາສະຖາບັນຄົ້ນຄວ້າ ຂອງກະຊວງ-ອົງການ ດຳເນີນການຄົ້ນຄວ້າວິທະຍາສາດ ແລະ ດຳເນີນການປະເມີນຄວາມເປັນໄປໄດ້ ໃນການປະຕິບັດໂຄງການໃໝ່, ໃຫ້ຍເພື່ອຮັບໃຊ້ໃຫ້ການສ້າງແຜນພັດທະນາເສດຖະກິດ-ສັງຄົມ ໃນສະເພາະໜ້າ ແລະ ຍາວນານ ເປັນຕົ້ນ: ໂຄງການຄົ້ນຄ້ວາການຫັນຊັບສິນເປັນທຶນ, ໂຄງການຄົ້ນຄ້ວາການສ້າງເທດສະບານ, ໂຄງການຄົ້ນຄວ້າສ້າງປະເທດລາວເປັນພື້ນທີ່ສີຂຽວຂອງໂລກ (ເພື່ອການທ່ອງທ່ຽວ), ຄົ້ນຄ້ວາສ້າງທາງລົດໄຟ ແລະ ສະໜາມບິນ, ໂຄງການສ້າງເຂດເສດຖະກິດສະເພາະ.

10.6 ເປັນເຈົ້າການຄົ້ນຄ້ວາ ສ້າງຍຸດທະສາດການພັດທະນາລະບົບສະຖິຕິແຫ່ງຊາດ ຮອດປີ 2020 ແລະ ສ້າງກົດໝາຍ ສະຖິຕິໃຫ້ສຳເລັດ ພາຍໃນ ສົກປີ 2009-2010.

**ມາດຕາ 11: ມອບໃຫ້ກະຊວງການເງິນ ປະຕິບັດດັ່ງນີ້ :**

11.1 ສືບຕໍ່ປັບປຸງກົງຈັກການຈັດຕັ້ງຂອງກະຊວງການເງິນ ລວມທັງດຳເນີນການຫັນສາມຂະແໜງການສາຍຕັ້ງ(ພາສີ, ອາກອນ, ຄັງເງິນ) ໃຫ້ມີຄວາມເຂັ້ມແຂງ, ເຂົ້າສູ່ລະບົບໃຫ້ສຳເລັດ ໃນຂອບເຂດທົ່ວປະເທດ. ຈັດຕັ້ງປະຕິບັດຫຼັກການລວມສູນລາຍຮັບງົບປະມານ, ສູ້ຊົນບຸກບືນສຸດຂີດ ເພື່ອຂຸດຄົ້ນຫາແຫຼ່ງລາຍຮັບທີ່ຍັງບົ່ມຊ້ອນ, ເກັບໃຫ້ໄດ້ໝົດ ແລະ ຖອກເຂົ້າງົບປະມານໃຫ້ຄົບຖ້ວນ, ພ້ອມກັນນັ້ນຕ້ອງຈຳກັດ ແລະ ອັດຊ່ອງຫວ່າງການຮົ່ວໄຫຼຂອງລາຍຮັບ ດ້ວຍການເພີ່ມທະວີການຕິດຕາມກວດກາ, ມີມາດຕະການປະຕິບັດວິໄນການເງິນ ແລະ ລະບຽບລວມສູນງົບປະມານຢ່າງເຂັ້ມງວດ.

- ເປັນເຈົ້າການໃນການປະສານສົມທົບກັບບັນດາຂະແໜງການ ແລະ ທ້ອງຖິ່ນ ຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ສົກປີ 2009-2010 ໃຫ້ໄດ້ຕາມຄາດໝາຍ ແລະ ລື່ນຄາດໝາຍ, ໂດຍສຸມໃສ່ຂຸດຄົ້ນທຸກແຫຼ່ງລາຍຮັບ ແລະ ເກັບລາຍຮັບລວມສູນເຂົ້າງົບປະມານແຫ່ງລັດ ເພື່ອຮັບປະກັນໃຫ້ແກ່ການປະຕິບັດລາຍຈ່າຍງົບປະມານໄປຕາມແຜນລາຍຈ່າຍ ທີ່ສະພາແຫ່ງຊາດໄດ້ຮັບຮອງເອົາ.
- ສືບຕໍ່ສ້າງ ແລະ ປັບປຸງບັນດານິຕິກຳ ທີ່ຕິດພັນກັບການຄຸ້ມຄອງການເງິນ ເພື່ອໃຫ້ສອດຄ່ອງກັບລະບຽບກົດໝາຍ ໃນການຈັດຕັ້ງປະຕິບັດແຕ່ລະໄລຍະ ເປັນຕົ້ນ ສ້າງດຳລັດວ່າດ້ວຍຄັງເງິນແຫ່ງຊາດ, ປັບປຸງລະບຽບການເບີກຈ່າຍງົບປະມານຜ່ານລະບົບຄັງເງິນແຫ່ງຊາດ; ເຂັ້ມງວດໃນການປະຕິບັດວິໄນການເງິນ ເປັນຕົ້ນແມ່ນ ຄົ້ນຄ້ວາອອກຄຳແນະນຳການຈັດຕັ້ງປະຕິບັດລະບຽບການກ່ຽວກັບການເກັບ ແລະ ນຳໃຊ້ງົບປະມານລາຍຮັບວິຊາການຂອງບັນດາຫົວໜ່ວຍງົບປະມານ ໂດຍໃຫ້ມີມາດຕະການ ຢ່າງຊັດເຈນ.

11.2 ຄຸ້ມຄອງຮ່ວງລາຍຮັບທີ່ລັດຖະບານໄດ້ກຳນົດອອກ ໃຫ້ລວມສູນເຂົ້າງົບປະມານແຫ່ງລັດ ຕາມກົດໝາຍ ວ່າດ້ວຍງົບປະມານແຫ່ງລັດ, ໃນນີ້ ໃຫ້ສຸມໃສ່ບາງບັນຫາດັ່ງນີ້:

- ກຳນົດປະເພດລາຍຮັບທີ່ເປັນພູດຂອງສູນກາງ ແລະ ທ້ອງຖິ່ນ ໃຫ້ລະອຽດ, ຊັດເຈນ ໂດຍອີງຕາມມາດຕາ 31 (ແຫຼ່ງລາຍຮັບທີ່ເປັນພູດຂອງສູນກາງ) ແລະ ມາດຕາ 38 (ແຫຼ່ງລາຍຮັບທີ່ເປັນພູດຂອງທ້ອງຖິ່ນ) ຂອງກົດໝາຍວ່າດ້ວຍງົບປະມານແຫ່ງລັດ. ສ່ວນລາຍຮັບພູດແບ່ງປັນລະຫວ່າງສູນກາງ ແລະ ທ້ອງຖິ່ນ ( ຕາມມາດຕາ 39 ) ນັ້ນ ໃຫ້ສືບຕໍ່ປະຕິບັດຄືກັນກັບປີຜ່ານມາໄປກ່ອນ.

- ສົມທົບກັບຫລາຍພາກສ່ວນ, ຂະແໜງການ ນັບທັງຂັ້ນສູນກາງ ແລະ ທ້ອງຖິ່ນ ເພື່ອຊອກຮູ້ປະກົດການລະເມີດລະບຽບການ ແລະ ເຊື່ອງອຳລາຍຮັບຂອງບັນດາຫົວໜ່ວຍທຸລະກິດ ທີ່ມີຈຸດປະສົງຫຼີກລ້ຽງພັນທະຕໍ່ງົບປະມານ, ລາຍຮັບວິຊາການຂອງບັນດາອົງການ ແລະ ຂະແໜງການ, ການລະເມີດລະບຽບການນຳເຂົ້າສິນຄ້າແບບບໍ່ຖືກຕ້ອງ.
- ປັບປຸງຂອດບໍລິການຂອງຂະແໜງລາຍຮັບໃຫ້ກະທັດຮັດເບົາບາງ, ວ່ອງໄວ, ຈະແຈ້ງແຕ່ຕ້ອງຮັບປະກັນຄວາມຖືກຕ້ອງ, ຊັດເຈນ ແລະ ໂປ່ງໃສ ເຮັດໃຫ້ຜູ້ທີ່ໄດ້ຮັບການບໍລິການມີຄວາມພໍໃຈ.
- ປະສານສົມທົບກັບອຳນາດການປົກຄອງທ້ອງຖິ່ນ (ແຂວງ, ເມືອງ, ບ້ານ) ໃນການເກັບພາສີທີ່ດິນ ແລະ ຄ່າເຊົ່າຈາກທີ່ດິນ ໂດຍໃຫ້ມີກົນໄກທີ່ຈະແຈ້ງ ແລະ ສ້າງຂໍ້ມູນສະຖິຕິເພື່ອເປັນພື້ນຖານ ໃຫ້ແກ່ການຂະຫຍາຍຕົວທາງດ້ານລາຍຮັບຈາກທີ່ດິນ ແລະ ໃຫ້ສອດຄ່ອງກັບລັດຖະບັນຍັດຂອງປະທານປະເທດ ເລກທີ 01/ສປປ.
- ຕັ້ງໜ້າ ແລະ ມີມາດຕະການເດັດຂາດ ເກັບກູ້ໜີ້ຕ້ອງຮັບທີ່ຍັງຕິດຄ້າງ ໃນປີຜ່ານມາ ເປັນຕົ້ນແມ່ນໜີ້ຕ້ອງຮັບຈາກການຈ່າຍເງິນລ່ວງໜ້າຂອງຄັງເງິນແຫ່ງຊາດ, ໜີ້ຕ້ອງຮັບຈາກການຕັດສິນຄະດີຕ່າງໆ ຂອງສານແຕ່ລະຂັ້ນ..

11.3 ຄົ້ນຄວ້ານິຕິກຳຈຳນວນໜຶ່ງ ເປັນຕົ້ນ ກຳນົດໝາຍແບ່ງປັນລາຍຈ່າຍບໍລິຫານປົກກະຕິ; ນະໂຍບາຍການຫັນຊັບສິນເປັນທຶນ; ລະບຽບການຄຸ້ມຄອງ ແລະ ນຳໃຊ້ເງິນບຳເນັດທີ່ໄດ້ຈາກການເກັບລາຍຮັບເກີນແຜນ ໃຫ້ສາມາດນຳໃຊ້ໄດ້ໃນສົກງົບປະມານ 2010-2011. ຄຸ້ມຄອງ ແລະ ນຳພາການຈັດຕັ້ງປະຕິບັດທຸກຮ່ວງລາຍຈ່າຍທີ່ສະພາແຫ່ງຊາດໄດ້ຮັບຮອງໃຫ້ຖືກຕ້ອງຕາມແຜນງານ, ໂຄງການ, ແຜນວຽກ, ແຜນຄົນ, ແຜນເງິນ ພ້ອມທັງຈັດແຜນລາຍຈ່າຍງົບປະມານ ສົກປີ 2009-2010 ເຂົ້າໃນແຜນວຽກຈຸດສຸມ ໂດຍສຸມໃສ່ບາງວຽກດັ່ງນີ້:

- ສູ້ຊົນຈັດຕັ້ງປະຕິບັດລາຍຈ່າຍງົບປະມານໃຫ້ໄປຕາມແຜນພັດທະນາເສດຖະກິດ-ສັງຄົມ ທີ່ສະພາແຫ່ງຊາດໄດ້ຮັບຮອງເອົາແລ້ວນັ້ນ ເພື່ອຮັບປະກັນການກະຕຸ້ນເສດຖະກິດ ແລະ ການຜະລິດສິນຄ້າໃຫ້ມີທ່ວງທ່າດີຂຶ້ນ.
- ສືບຕໍ່ຄົ້ນຄວ້າ ແລະ ປັບປຸງການບັນຊີແຫ່ງລັດ ແລະ ການບັນຊີວິສາຫະກິດ ເພື່ອປະຕິບັດໃຫ້ສອດຄ່ອງກັບກົດໝາຍວ່າດ້ວຍ ການບັນຊີ (ສະບັບປັບປຸງ).

11.4 ຮີບຮ້ອນສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ອອກດຳລັດການເກັບອາກອນມູນຄ່າເພີ່ມ ແລະ ໃຫ້ປະຕິບັດການເກັບອາກອນມູນຄ່າເພີ່ມ ນັບແຕ່ວັນທີ 1 ເດືອນ ມັງກອນ 2010 ເປັນຕົ້ນໄປ ພ້ອມທັງເອົາໃຈໃສ່ສຶກສາອົບຮົມ ພາກສ່ວນທຸລະກິດ, ປະຊາຊົນ, ຜູ້ປະກອບການ ແລະ ສະມາຊິກພັກ ພະນັກງານ ເພື່ອຮັບຮູ້ ແລະ ເຂົ້າໃຈ, ໄປພ້ອມກັບ ການກະກຽມພະນັກງານ, ການປະກອບເຄື່ອງມືທີ່ຈຳເປັນ, ປັບປຸງລະບົບບັນຊີຂອງບັນດາວິສາຫະກິດ.

11.5 ໃນໄລຍະຕົ້ນປີ ທີ່ລາຍຮັບງົບປະມານບໍ່ທັນຮັບປະກັນໃຫ້ແກ່ການປະຕິບັດລາຍຈ່າຍໄດ້ນັ້ນ ໃຫ້ກະຊວງການເງິນມີສິດຢືມເງິນລ່ວງໜ້າຈາກທະນາຄານແຫ່ງລັດ ໃນວົງເງິນບໍ່ໃຫ້ກາຍມູນຄ່າຂອງແຜນລາຍຈ່າຍແຜນງົບປະມານງວດ I ເພື່ອຮັບປະກັນລາຍຈ່າຍຮັບໃຊ້ວຽກບໍລິຫານຂອງລັດຖະບານ, ແຕ່ຕ້ອງມີກົນໄກຊຳລະສະສາງຄືນໃຫ້ທະນາຄານເປັນລະບົບ ເພື່ອຮັບປະກັນໃຫ້ແກ່ການຮັກສາສະຖຽນລະພາບດ້ານການເງິນແຫ່ງຊາດ ຕາມທີ່ໄດ້ເຄີຍປະຕິບັດຜ່ານມາ.

11.6 ກະຊວງການເງິນ ສົມທົບກັບບັນດາຂະແໜງການທີ່ກ່ຽວຂ້ອງຊອກຫາແຫລ່ງທຶນກູ້ຢືມ ແລະ ຊ່ວຍເຫຼືອລ້າຈາກຕ່າງປະເທດ ທີ່ບໍ່ມີເງື່ອນໄຂຜູກມັດ, ດອກເບ້ຍຕໍ່າ ໄລຍະກູ້ຢືມຍາວ ເພື່ອປະຕິບັດໂຄງການພັດທະນາທີ່ເປັນບູລິມະສິດຂອງລັດຖະບານ.

**ມາດຕາ 12: ມອບໃຫ້ທະນາຄານແຫ່ງ ສປປ ລາວ ປະຕິບັດ ດັ່ງນີ້ :**

12.1 ຄົ້ນຄວ້າເພື່ອວາງນະໂຍບາຍເງິນຕາໃຫ້ສົມຄູ່ກັບການຂະຫຍາຍຕົວຂອງເສດຖະກິດ, ຄຸ້ມຄອງ ແລະ ປັບປຸງທະນາຄານທຸລະກິດລັດໃຫ້ມີຄວາມສາມາດໃນການບໍລິການຢ່າງມີປະສິດທິພາບ ແລະ ໄດ້ມາດຕະຖານສາກົນເທື່ອລະກ້າວ ເພື່ອສ້າງຄວາມເຊື່ອຖືແກ່ລູກຄ້າ; ເພີ່ມທະວີເອົາໃຈໃສ່ ການແກ້ໄຂບັນຫາໜີ້ສິນຄ້າງຄາ ແລະ ໜີ້ບໍ່ເກີດດອກອອກຜົນ ໂດຍໃຫ້ມີມາດຕະການປະຕິບັດ ທີ່ຊັດເຈນ ແລະ ມີປະສິດທິພາບ; ອຳນວຍຄວາມສະດວກເງິນລ່ວງໜ້າໃຫ້ງົບປະມານ ຕາມມາດຕາ 11 ຂໍ້ 11.5 ຂອງດຳລັດສະບັບນີ້ ໃຫ້ທັນກັບສະພາບຄວາມຕ້ອງການຕົວຈິງ.

12.2 ເພີ່ມການຊີ້ນຳບັນດາທະນາຄານ ເປັນຕົ້ນ ທະນາຄານທຸລະກິດຂອງລັດ ໃນການລະດົມເງິນຝາກໃຫ້ໄດ້ຕາມຄາດໝາຍ ແລະ ປ່ອຍສິນເຊື່ອຢ່າງໜ້ອຍຕ້ອງປະຕິບັດໃຫ້ໄດ້ຕາມແຜນການປ່ອຍສິນເຊື່ອເພື່ອກະຕຸ້ນເສດຖະກິດ ຈຳນວນ 1.496 ຕື້ກີບ. ການປ່ອຍສິນເຊື່ອຕ້ອງໄປຕາມກຸ່ມເປົ້າໝາຍ ແລະ ບັນດາໂຄງການຜະລິດເປັນສິນຄ້າແບບຍືນຍົງ ແລະ ສົ່ງເສີມທຸລະກິດຂະໜາດນ້ອຍ-ຂະໜາດກາງ. ໂຈະການປ່ອຍສິນເຊື່ອໃຫ້ໂຄງການກໍ່ສ້າງພື້ນຖານໂຄງລ່າງ, ສ່ວນໂຄງການທີ່ໄດ້ຮັບສິນເຊື່ອແລ້ວ ໃຫ້ສືບຕໍ່ປະຕິບັດຕາມສັນຍາ, ໂຄງການໃດທີ່ມີຄວາມຈຳເປັນຮີບດ່ວນ ໃຫ້ສະເໜີລັດຖະບານ ແລະ ຄະນະປະຈຳສະພາແຫ່ງຊາດ ພິຈາລະນາຕົກລົງກ່ອນ ຈຶ່ງດຳເນີນການໄດ້. ສ່ວນການປ່ອຍສິນເຊື່ອຂອງທະນາຄານທຸລະກິດ, ທະນາຄານນະໂຍບາຍໃຫ້ສືບຕໍ່ປ່ອຍຕາມປົກກະຕິ.

12.3 ເພີ່ມແຫລ່ງທຶນສິນເຊື່ອເພື່ອແກ້ໄຂຄວາມທຸກຍາກຂອງທະນາຄານນະໂຍບາຍ ໂດຍໃຫ້ຄະນະຊີ້ນຳພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກແຫ່ງຊາດ ສົມທົບກັບບັນດາກະຊວງ-ອົງການກ່ຽວຂ້ອງ ແລະ ທະນາຄານ ຄົ້ນຄວ້າສ້າງໂຄງການເພື່ອສະເໜີຂໍກູ້ຢືມນຳທະນາຄານໂລກ ແລະ ສະຖາບັນອື່ນໆຕື່ມ. ຊຸກຍູ້ທະນາຄານນະໂຍບາຍ ຢູ່ແຕ່ລະຂັ້ນໃຫ້ເຄື່ອນໄຫວປ່ອຍເງິນກູ້ ໃຫ້ກຸ່ມເປົ້າໝາຍ, ແຕ່ຕ້ອງອີງໃສ່ໂຄງການຜະລິດສິນຄ້າ ແລະ ລຶບລ້າງຄວາມທຸກຍາກຂອງທ້ອງຖິ່ນ ເພື່ອປ່ອຍເງິນກູ້ ຢ່າງມີຈຸດສຸມ ແລະ ມີປະສິດທິຜົນ.

12.4 ຄຸ້ມຄອງ ແລະ ດັດສົມປະລິມານເງິນໃນຂອດຈໍລະຈອນຕາມການຂະຫຍາຍຕົວຂອງ ເສດຖະກິດຢ່າງຈິດຈໍ່ຕື່ມອີກ, ພ້ອມກັນນັ້ນ ກໍປ່ອຍສິນເຊື່ອໃຫ້ໄດ້ຕາມແຜນທີ່ກຳນົດໄວ້ ເພື່ອຊຸກຍູ້ການຜະລິດເຂົ້າ, ສະບຽງອາຫານ ແລະ ຜະລິດສິນຄ້າອື່ນໆ ເພື່ອຕອບສະໜອງຄວາມຕ້ອງການຂອງ ຕະຫຼາດໃຫ້ໄດ້ຢ່າງພຽງພໍ, ໃນນີ້ ໃຫ້ເອົາໃຈໃສ່ເປັນພິເສດຕໍ່ການຕິດຕາມກວດກາການປ່ອຍສິນເຊື່ອ ໃຫ້ຖືກຕາມເປົ້າໝາຍ ແລະ ການນຳໃຊ້ສິນເຊື່ອໃຫ້ເກີດດອກອອກຜົນ.

12.5 ສົ່ງເສີມການນຳໃຊ້ເງິນກີບ ໃຫ້ກວ້າງຂວາງກວ່າເກົ່າ, ປັບປຸງລະບົບທະນະຄານທຸລະກິດຂອງລັດ ແລະ ຫຸ້ນສ່ວນ ໃຫ້ມີຄວາມເຂັ້ມແຂງ ດ້ວຍການເພີ່ມທຶນໃຫ້ພຽງພໍ ແລະ ປັບປຸງການດຳເນີນງານໃຫ້ມີຄວາມສາມາດແຂ່ງຂັນສູງ ແລະ ມີຄວາມທັນສະໄໝຍິ່ງຂຶ້ນ; ສົ່ງເສີມການຊຳລະຜ່ານລະບົບທະນາຄານ, ເປີດກວ້າງການບໍລິການເບີກຈ່າຍເງິນເດືອນຂອງອົງການບໍລິຫານ ແລະ ວິສາຫະກິດຜ່ານບັນຊີຢູ່ທະນາຄານ; ຄຸ້ມຄອງກວດກາການເຄື່ອນໄຫວຂອງທະນາຄານທຸລະກິດ ແລະ ສະຖາບັນການເງິນຢ່າງຮັດກຸມ ຕາມລະບຽບກົດໝາຍ.

**ມາດຕາ 13: ມອບໃຫ້ກະຊວງກະສິກຳ-ປ່າໄມ້ ປະຕິບັດດັ່ງນີ້:**

13.1 ສຸມທຸກກຳລັງ ແລະ ປະຕິບັດບັນດາມາດຕະການສົ່ງເສີມທີ່ຕັ້ງໜ້າເພື່ອໃຫ້ການຜະລິດເຂົ້າ ແລະ ພືດເປັນສິນຄ້າໃຫ້ໄດ້ຕາມແຜນ, ຮັບປະກັນໃຫ້ການຜະລິດລະດູນາປີ ແລະ ການປູກພືດເປັນສິນຄ້າໃນລະດູຝົນທີ່ຈະມາເຖິງນີ້ໃຫ້ໄດ້ຮັບຜົນດີ; ປັບປຸງ ແລະ ສ້າງຕັ້ງກຸ່ມການຜະລິດໃຫ້ເຂັ້ມແຂງຂຶ້ນຕື່ມ.

13.2 ສະໜອງແນວພັນ, ປັບປຸງ-ຟື້ນຟູລະບົບຊົນລະປະທານ; ກະກຽມຮອບດ້ານ ເພື່ອຕ້ານແລ້ງຕ້ານຖ້ວມ ໂດຍເອົາໃຈໃສ່ຕໍ່ເຂດທີ່ມີຄວາມສ່ຽງເພື່ອແກ້ໄຂໃຫ້ທັນການ ແລະ ມີປະສິດທິພາບ; ຮີບຮ້ອນປະຕິບັດໂຄງການຈຸດສຸມຂອງລັດຖະບານກ່ຽວກັບການຈັດສັນ ແລະ ພັດທະນາທີ່ດິນກະສິກຳ.

13.3 ສືບຕໍ່ຜັນຂະຫຍາຍຍຸດທະສາດປ່າໄມ້ຮອດປີ 2020 ອອກເປັນໂຄງການ ແລະ ແຜນວຽກລະອຽດ. ສືບຕໍ່ປັບປຸງ ແລະ ຂະຫຍາຍຕາໜ່າງຄຸ້ມຄອງປ່າສະຫງວນແຫ່ງຊາດ 21 ແຫ່ງ, ສຳຫລວດ ແລະ ກຳນົດເຂດປ່າຜະລິດແຫ່ງຊາດ, ເອົາໃຈໃສ່ສຶກສາສຳຫລວດ ແລະ ກຳນົດເຂດປ່າປ້ອງກັນຍອດນ້ຳ ແລະ ສາຂາຍ່ອຍຕ່າງໆ, ສຳຫລວດແບ່ງເຂດດິນປ່າໄມ້ປະເພດຕ່າງໆ, ດຳເນີນການຟື້ນຟູປ່າທຳມະຊາດ ໄປຄຽງຄູ່ກັບ ການບຸກລະດົມການປູກໄມ້ເພື່ອເພີ່ມອັດຕາການປົກຫຸ້ມຂອງປ່າໄມ້ໃຫ້ໄດ້ ປະມານ 53% ພາຍໃນປີ 2010.

13.4 ປະສານສົມທົບກັບກະຊວງອຸດສາຫະກຳ ແລະ ການຄ້າ, ອົງການຄຸ້ມຄອງທີ່ດິນແຫ່ງຊາດ ແລະ ທ້ອງຖິ່ນຕ່າງໆ ປະຕິບັດຄຳສັ່ງ ເລກທີ 17/ນຍ, ລົງວັນທີ 22/09/2008 ວ່າດ້ວຍການເພີ່ມທະວີຄວາມເຂັ້ມງວດໃນການຄຸ້ມຄອງ, ປົກປັກຮັກສາປ່າໄມ້ ແລະ ການປະສານງານໃນການຄຸ້ມຄອງປ່າໄມ້ ແລະ ທຸລະກິດໄມ້ ຢ່າງເຂັ້ມງວດ.

13.5 ເຂັ້ມງວດກວດກາ ການບຸກລຸກເຂົ້າເຂດປ່າສະຫງວນ ໂດຍນຳໃຊ້ມາດຕະການທາງດ້ານ ກົດໝາຍຢ່າງເດັດຂາດ, ປັບປຸງກວດກາການເຄື່ອນຍ້າຍສັດເຂົ້າ-ອອກຕາມຈຸດດ່ານສາກົນຕ່າງໆ.

13.6 ປະສານສົມທົບແໜ້ນກັບຂະແໜງພະລັງງານ ເພື່ອສືບຕໍ່ຈັດຕັ້ງປະຕິບັດນະໂຍບາຍອຸດໜູນລາຄາພະລັງງານ ເພື່ອຮັບໃຊ້ການຜະລິດກະສິກຳ ເປັນຕົ້ນ ເຂົ້າ ແລະ ສະບຽງອາຫານ.

13.7 ຊຸກຍູ້ການຜະລິດກະສິກຳ ໃຫ້ຕິດພັນກັບອຸດສາຫະກຳປຸງແຕ່ງ ໂດຍສຸມໃສ່ການຂະຫຍາຍກຳລັງການຜະລິດ ແລະ ປັບປຸງການພົວພັນການຜະລິດໃຫ້ດີຂຶ້ນ. ສຸມທຶນຮອນເຂົ້າໃສ່ວຽກງານ ສົ່ງເສີມດ້ານວິຊາການ ເປັນຕົ້ນ ການຄົ້ນຄວ້າ-ທົດລອງ ແລະ ຜັນຂະຫຍາຍ ຜົນສຳເລັດດັ່ງກ່າວເຂົ້າສູ່ຂະບວນການຜະລິດຕົວຈິງ. ອອກລະບຽບການ ແລະ ແຈ້ງການຕ່າງໆ ເພື່ອຊຸກຍູ້ການຜະລິດໃຫ້ທ່ວງທັນກັບລະດູການ.

13.8 ຊີ້ນຳກົມວິຊາການ, ຂະແໜງການສາຍຕັ້ງຂອງຕົນຢູ່ທ້ອງຖິ່ນ ໃຫ້ການບໍລິການ ແລະ ຊ່ວຍເຫລືອແນະນຳ ແນວພັນ, ເຕັກນິກວິຊາການດ້ານປູກຝັງ ແລະ ລ້ຽງສັດ ໃຫ້ຊາວກະສິກອນ ປ້ອງກັນສັດຕູພືດ, ພະຍາດສັດ ແນໃສ່ຍົກສູງສະມັດຕະພາບການຜະລິດ.

13.9 ສົມທົບກັບຂະແໜງການທີ່ກ່ຽວຂ້ອງ ປະເມີນປະສິດທິຜົນໂຄງການຊົນລະປະທານ ໃນທົ່ວປະເທດ ເພື່ອວາງແຜນພັດທະນາລະບົບຊົນລະປະທານໃນສະເພາະໜ້າ ແລະຍາວນານ.

**ມາດຕາ 14: ມອບໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ປະຕິບັດດັ່ງນີ້ :**

14.1 ເພີ່ມທະວີ ແລະ ສົ່ງເສີມການສົ່ງອອກຢ່າງແຂງແຮງ ດ້ວຍການປັບປຸງການບໍລິການລັດໃຫ້ກະທັດຮັດ, ປັບປຸງບັນດານິຕິກຳທີ່ພົວພັນ ກັບການນຳເຂົ້າ ແລະ ສົ່ງອອກ ລວມທັງຂໍ້ກຳນົດຕ່າງໆ ກ່ຽວກັບການຄ້າຊາຍແດນ, ຜ່ານແດນ ແລະ ຂາອອກຕໍ່ໃຫ້ຄ່ອງຕົວ. ສືບຕໍ່ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ

ຄົ້ນຄວ້ານະໂຍບາຍ, ກົດໝາຍ, ລະບຽບການຕ່າງໆ ເພື່ອພັດທະນາ ແລະ ຄຸ້ມຄອງເຂດເສດຖະກິດພິເສດ, ເຂດອຸດສາຫະກຳ, ເຂດການຄ້າເສລີ ແລະ ການບໍລິການຜ່ານ ທີ່ລັດຖະບານໄດ້ຕົກລົງແລ້ວໃຫ້ສຳເລັດໂດຍໄວ.

14.2 ຄົ້ນຄວ້າເພື່ອວາງນະໂຍບາຍ ແລະກົນໄກໃນການສົ່ງເສີມ ແລະ ເພີ່ມມູນຄ່າການສົ່ງອອກ ກັບບັນດາປະເທດຄູ່ຄ້າ, ປະເທດໃນກຸ່ມອາຊຽນ, ສະຫະພາບເອີຣົບ ແລະ ສຸມໃສ່ການຂະຫຍາຍຕະຫລາດການສົ່ງອອກໃຫ້ກວ້າງອອກສູ່ສາກົນ, ເປີດຕະຫລາດໃໝ່ອອກສູ່ບັນດາປະເທດທີ່ມີທ່າແຮງ ແລະ ຄົ້ນຄວ້າ ສິນຄ້າໃໝ່ທີ່ມີທ່າແຮງບົ່ມຊ້ອນຂອງຊາດ. ສືບຕໍ່ເຈລະຈາ ເພື່ອເຂົ້າເປັນສະມາຊິກ ອົງການການຄ້າໂລກ.

14.3 ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ແຜນແມ່ບົດພັດທະນາວິສະຫາກິດຂະໜາດນ້ອຍ ແລະ ກາງ, ດຳລັດ ເລກທີ 42/ນຍ ວ່າດ້ວຍການສົ່ງເສີມ ແລະ ພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ ຢູ່ ສປປ ລາວ ເພື່ອຊຸກຍູ້ການຜະລິດໃຫ້ກວ້າງຂວາງຂຶ້ນກວ່າເກົ່າ ໂດຍສົ່ງເສີມໃຫ້ທຸກພາກສ່ວນເສດຖະກິດເຂົ້າຮ່ວມຢ່າງຕັ້ງໜ້າ.

14.4 ປະສານສົມທົບກັບ ສະພາອຸດສາຫະກຳ-ການຄ້າ ແລະທະນາຄານຄົ້ນຄວ້າສ້າງໂຄງການເພື່ອປ່ອຍສິນເຊື່ອຕາມກຸ່ມເປົ້າໝາຍ ແລະ ບັນດາໂຄງການຜະລິດເປັນສິນຄ້າແບບຍືນຍົງ ແລະ ສົ່ງເສີມທຸລະກິດຂະໜາດນ້ອຍ-ຂະໜາດກາງ.

14.5 ເພີ່ມທະວີປະຕິບັດພາລະບົດບາດຄຸ້ມຄອງ-ດັດສົມຕະຫຼາດ; ຕິດຕາມຢ່າງໃກ້ສິດສະພາບການເໜັງຕີງຂອງລາຄາສິນຄ້າ, ສະພາບການສະໜອງ ແລະ ຄວາມຕ້ອງການສິນຄ້າອຸປະໂພກບໍລິໂພກ ໂດຍສະເພາະແມ່ນເຂົ້າ ແລະ ສະບຽງອາຫານ; ໃຫ້ດຳເນີນມາດຕະການແຊກແຊງໃນເມື່ອຈຳເປັນ ເພື່ອໃຫ້ລາຄາມີຄວາມສະຫງົບສົມເຫດສົມຜົນ, ສະກັດກັ້ນການກັກຕູນ ເພື່ອສວຍໂອກາດຂຶ້ນລາຄາຕາມລຳພັງໃຈ; ຮີບຮ້ອນປັບປຸງລັດວິສາຫະກິດສະບຽງອາຫານ ໃຫ້ມີຄວາມເຂັ້ມແຂງຕິດພັນກັບການປັບປຸງກຸ່ມເກັບຊື້ ແລະ ກຸ່ມສະໜອງປັດໃຈຮັບໃຊ້ການຜະລິດ; ສ້າງຄັງແຮເຂົ້າຂອງລັດ ເພື່ອຮັບປະກັນການສະໜອງສະບຽງອາຫານຢ່າງໜັກແໜ້ນ ແລະ ເພື່ອເປັນເຄື່ອງມືທີ່ມີປະສິດທິພາບ ໃນການແຊກແຊງຕະຫຼາດ; ຄຸ້ມຄອງລາຄານ້ຳມັນເຊື້ອໄຟ ຕາມກົນໄກຂອງລັດຖະບານຢ່າງຄ່ອງຕົວ, ຮັບປະກັນການສະໜອງແກ່ສັງຄົມ ເປັນປົກກະຕິ (ບໍ່ໃຫ້ເກີດສະພາບຂາດແຄນ) ແລະ ບໍ່ໃຫ້ມີການເກື້ອກູນຈາກລັດຖະບານ; ກຳຈັດການສວຍໂອກາດລັກໂລບ ແລະ ກັກຕູນ ເພື່ອໂກງກຳໄລ.

14.6 ຈັດຕັ້ງ ແລະ ປັບປຸງກຸ່ມຫັດຖະກຳໃຫ້ເຂັ້ມແຂງ, ເອົາໃຈໃສ່ຍົກລະດັບຄຸນນະພາບຜະລິດຕະພັນ ແລະ ຊອກຫາຕະຫລາດຫັດຖະກຳຢູ່ຕ່າງປະເທດ, ສົມທົບກັບຄະນະກຳມະການກິລາແຫ່ງຊາດຈັດຕັ້ງການຜະລິດເຄື່ອງທີ່ລະນຶກເພື່ອຕ້ອນຮັບງານມະຫາກຳກິລາຊີເກມ.

14.7 ຊີ້ນຳ ແລະ ໃຫ້ການສະໜັບສະໜູນດ້ານການຕະຫລາດ ແລະ ສົ່ງເສີມການຜະລິດແບບຜູກພັນ 2 ສົ້ນ ໂດຍໃຫ້ອົງການທີ່ກ່ຽວຂ້ອງຮັບຮູ້ ແລະ ຊ່ວຍໃນການຄຸ້ມຄອງການປະຕິບັດຂໍ້ຜູກພັນຂອງແຕ່ລະຝ່າຍ.

14.8 ຈັດຕັ້ງເທດສະການ ແລະ ງານຕະຫລາດນັດເປັນປະຈຳ ເພື່ອໂຄສະນາ, ຈຳໜ່າຍຜະລິດຕະພັນສິນຄ້າອຸດສາຫະກຳ-ຫັດຖະກຳ, ແລກປ່ຽນບົດຮຽນ, ຂໍ້ມູນຂ່າວສານຕ່າງໆ.

**ມາດຕາ 15: ມອບໃຫ້ກະຊວງພະລັງງານ ແລະ ບໍ່ແຮ່ ປະຕິບັດດັ່ງນີ້:**

15.1 ຊຸກຍູ້ໂຄງການນ້ຳເທີນ 2 ແລະ ເຊເສັດ 2 ໃຫ້ໄດ້ເລີ່ມຜະລິດໄຟຟ້າໃນທ້າຍປີ 2009, ສືບຕໍ່ຊຸກຍູ້ໂຄງການທີ່ກຳລັງກໍ່ສ້າງ ເຊັ່ນ: ນ້ຳງື່ມ2, ເຊຂະໜານ3, ນ້ຳລີກ1/2, ນ້ຳງື່ມ5 ແລະນ້ຳຍອນ ໃຫ້ສຳເລັດ

ຕາມແຜນການ; ຊຸກຍູ້ໃຫ້ໄດ້ເລີ່ມລົງມືກໍ່ສ້າງໂຄງການນໍ້າເທີນ1, ນໍ້າງື່ມ3, ນໍ້າງຽບ1, ທົ່ງສາລິກໄນ, ເທີນຫີນບູນພາກຂະຫຍາຍ, ນໍ້າສີມ, ນໍ້າອູ ແລະອື່ນໆ.

15.2 ຕິດຕາມການປ່ຽນແປງຂອງ ລາຄາແຮ່ທາດໃນຕະຫລາດໂລກຢ່າງຈິດຈໍ່ ເພື່ອເພີ່ມປະລິມານການຂຸດຄົ້ນ, ການປຸງແຕ່ງ ແລະ ເພີ່ມປະລິມານການສົ່ງອອກຢ່າງເໝາະສົມ, ພິຈາລະນາຂໍ້ສະເໜີຕ່າງໆຂອງຜູ້ປະກອບການຢ່າງເໝາະສົມ ເພື່ອໃຫ້ໂຄງການດໍາເນີນໄປໄດ້ປົກກະຕິ ແລະ ເປັນຜົນດີຕໍ່ທຸກຝ່າຍບົນພື້ນຖານ ການຍຶດໝັ້ນໃນສັນຍາ ແລະ ກົດໝາຍ. ສືບຕໍ່ປັບປຸງບັນດາລະບຽບການຕ່າງໆທີ່ຍັງບໍ່ທັນສອດຄ່ອງ, ມີຊ່ອງຫວ່າງ ແລະ ຊໍ້າຊ້ອນກັນ; ສ້າງລະບຽບການອັນຈໍາເປັນເພື່ອອໍານວຍ, ຄວບຄຸມ ສົ່ງເສີມການຜະລິດ ແລະ ການລົງທຶນ.

15.3 ດໍາເນີນການຄົ້ນຄວ້າໂຄງການຜະລິດ ແລະ ນໍາໃຊ້ພະລັງງານທົດແທນນໍ້າມັນ, ປະຕິບັດນະໂຍບາຍປະຢັດໄຟຟ້າ ແລະຫຼຸດຜ່ອນໄຟຟ້າຕົກເຮ່ຍ; ກວດກາ ແລະ ສ້ອມແປງສະຖານີໄຟຟ້າຮັບໃຊ້ຊີວິດປະຊາຊົນຢູ່ທຸກໆບ່ອນ. ປະສານສົມທົບກັບກະຊວງກະສິກໍາ-ປ່າໄມ້ ປະຕິບັດນະໂຍບາຍອຸດໜູນລາຄາພະລັງງານໄຟຟ້າສໍາລັບຊົນລະປະທານ ເພື່ອຮັບໃຊ້ການຜະລິດກະສິກໍາ ເປັນຕົ້ນແມ່ນເຂົ້າ ແລະ ສະບຽງອາຫານ.

**ມາດຕາ 16: ມອບໃຫ້ຄະນະຊີ້ນໍາພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກແຫ່ງຊາດ ປະຕິບັດດັ່ງນີ້:**

16.1 ເຮັດບົດບາດມະຫາພາກໃນການຕິດຕາມ, ຊຸກຍູ້, ກວດກາການຈັດຕັ້ງປະຕິບັດໂຄງການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ແລະ ສະຫລຸບສັງລວມບັນຫາຕ່າງໆ ເພື່ອລາຍງານຕໍ່ລັດຖະບານ, ເພີ່ມທະວີບົດບາດປະສານງານ ລະຫວ່າງ ບັນດາຂະແໜງການ-ອົງການຂັ້ນສູນກາງກັບທ້ອງຖິ່ນ ໃນການຈັດຕັ້ງປະຕິບັດບັນດາແຜນງານ, ໂຄງການ ແລະ ກິດຈະການຕ່າງໆເພື່ອແກ້ໄຂຄວາມທຸກຍາກ.

16.2 ຄົ້ນຄວ້າປັບປຸງກົນໄກການປະສານງານ ລະຫວ່າງ ຂະແໜງການຂັ້ນສູນກາງດ້ວຍກັນ ແລະ ລະຫວ່າງສູນກາງ ກັບທ້ອງຖິ່ນ, ອອກລະບຽບການ ແລະ ກົນໄກຄຸ້ມຄອງນໍາໃຊ້ທຶນຈາກແຫຼ່ງຕ່າງໆ ເຂົ້າໃນໂຄງການພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ. ພ້ອມດຽວກັນນັ້ນ ກໍ່ຊຸກຍູ້ຂະແໜງການ ແລະ ທ້ອງຖິ່ນປະຕິບັດລະບອບການລາຍງານວຽກງານດັ່ງກ່າວຢ່າງປົກກະຕິ ແລະ ປັບປຸງຖານຂໍ້ມູນຄວາມທຸກຍາກໃຫ້ຄົບຖ້ວນສົມບູນຂຶ້ນຕື່ມ ເພື່ອຮັບໃຊ້ໃຫ້ແກ່ວຽກງານສ້າງແຜນການ, ແຜນງານ ແລະ ໂຄງການໃນແຕ່ລະໄລຍະ.

16.3 ປະສານກັບຂະແໜງການ ແລະ ທ້ອງຖິ່ນ ຕິດຕາມຊຸກຍູ້ການຈັດຕັ້ງປະຕິບັດໂຄງການຫຼຸດຜ່ອນຄວາມທຸກຍາກຕ່າງໆ ທີ່ລັດຖະບານຈັດສັນງົບປະມານ ໃຫ້ຈໍານວນ 97 ຕື້ກີບ, ໃນນັ້ນລວມມີ: ທຶນສໍາລັບໂຄງການຫຼຸດຜ່ອນຄວາມທຸກຍາກຂອງກຸ່ມບ້ານຕ່າງໆຈໍານວນ 30 ຕື້ກີບ, ທຶນພັດນາຊາຍແດນ ຈໍານວນ 17 ຕື້ກີບ, ທຶນຈາກແຜນງານບຸລິມະສິດຕາມສັນຍານໍ້າເທີນ 2 ຈໍານວນ 50 ຕື້ກີບ ເພື່ອສັງລວມບັນຫາທັງດ້ານດີ ແລະ ດ້ານອ່ອນ, ບົດຮຽນຖອດຖອນໄດ້ລາຍງານ ຕໍ່ລັດຖະບານ. ສໍາລັບໂຄງການຫຼຸດຜ່ອນຄວາມທຸກຍາກ ບ້ວງ 30 ຕື້ກີບ ມອບໃຫ້ຄະນະຊີ້ນໍາພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກແຫ່ງຊາດ ເປັນຜູ້ຊີ້ນໍາ, ຊຸກຍູ້ ແລະ ຕິດຕາມກວດກາ; ໂຄງການທີ່ນອນໃນຂະແໜງໃດ ແມ່ນມອບໃຫ້ຂະແໜງການນັ້ນຢູ່ທ້ອງຖິ່ນ ເປັນຜູ້ຄຸ້ມຄອງ, ຈັດຕັ້ງປະຕິບັດ ແລະ ສະຫຼຸບລາຍງານ ຕາມລະບຽບການ.

16.4 ປະສານສົມທົບກັບກະຊວງແຜນການ ແລະ ການລົງທຶນ ແລະ ພາກສ່ວນທີ່ກ່ຽວຂ້ອງ ສືບຕໍ່ປັບປຸງມາດຖານຄວາມທຸກຍາກຂອງປະເທດໃຫ້ສໍາເລັດໂດຍໄວ.

**ມາດຕາ 17: ມອບໃຫ້ກະຊວງໂຍທາທິການ ແລະ ຂົນສົ່ງ ປະຕິບັດດັ່ງນີ້:**

17.1 ສືບຕໍ່ຕິດຕາມ ບັນດາໂຄງການກໍ່ສ້າງຂົວ-ທາງ ໃຫ້ມີຜົນຄືບໜ້າ ແລະ ສໍາເລັດຕາມສັນຍາ, ໃນນີ້ໃຫ້ເອົາໃຈໃສ່ບັນດາໂຄງການທີ່ເປັນຍຸດທະສາດທາງຜ່ານເໜືອ-ໃຕ້ ແລະ ຕາເວັນອອກ-ຕາເວັນຕົກ, ໂຄງການກໍ່ສ້າງເສັ້ນທາງຮອງຮັບການແຂ່ງຂັນກິລາຊີເກມ ແລະ ການສະເຫລີມສະຫລອງການສ້າງນະຄອນຫລວງວຽງຈັນ ຄົບຮອບ 450 ປີ. ສືບຕໍ່ກວດກາການສ້ອມແປງ ບັນດາເສັ້ນທາງ ແລະ ຂົວທີ່ໄດ້ຮັບຜົນກະທົບຈາກໄພນໍ້າຖ້ວມ ແລະ ກຽມຄວາມພ້ອມເພື່ອຮັບມືກັບອຸທົກກະໄພທີ່ອາດເກີດຂຶ້ນໃນສົກປີນີ້ ໂດຍສະເພາະໃນເຂດທີ່ມີຄວາມສ່ຽງ.

17.2 ໃຫ້ເຈລະຈາກັບປະເທດເພື່ອນບ້ານ ກ່ຽວກັບການຂົນສົ່ງຜ່ານແດນ ແນໃສ່ເຮັດໃຫ້ບໍລິສັດພາຍໃນສາມາດຂົນສົ່ງສິນຄ້າຜ່ານປະເທດເຮົາໄດ້ຫລາຍຂຶ້ນ ໂດຍມີການຄຸ້ມຖ່າຍທີ່ສະດວກເປັນລະບົບ, ພ້ອມນັ້ນ ກໍ່ຊຸກຍູ້ໃຫ້ສະມາຄົມຂົນສົ່ງປັບປຸງຕົນເອງ ແລະ ຍົກລະດັບຄວາມສາມາດໃຫ້ທຽບທັນປະເທດອື່ນ.

17.3 ຊຸກຍູ້ໃຫ້ເປີດສາຍການບິນໂດຍກົງລະຫວ່າງວຽງຈັນ ແລະ ຫລວງພະບາງໄປຍັງປະເທດຕ່າງໆ ດ້ວຍຫລາຍຮູບແບບ, ຈັດຕາຕະລາງເວລາການບິນຈາກຮ່າໂນ້ຍ-ໂຮຈິມິນ ມາວຽງຈັນ ໃຫ້ເໝາະສົມ ເພື່ອສາມາດຮັບເອົານັກທ່ອງທ່ຽວຈາກຍີ່ປຸ່ນ ແລະ ປະເທດອື່ນໆມາວຽງຈັນໃຫ້ຫລາຍຂຶ້ນ. ເປັນເຈົ້າການສະເໜີເຈລະຈາເຮັດສັນຍາເປີດສາຍການບິນກັບປະເທດຕ່າງໆໃຫ້ຫລາຍຂຶ້ນ.

17.4 ສືບຕໍ່ຄົ້ນຄວ້າຮ່າງດໍາລັດກ່ຽວກັບກໍານົດໝາຍ ມາດຖານລາຄາຫົວໜ່ວຍການກໍ່ສ້າງ ແລະ ສ້ອມແປງຕ່າງໆ ໃຫ້ສໍາເລັດໂດຍໄວ ເພື່ອເປັນບ່ອນອີງໃຫ້ແກ່ການວາງແຜນ, ການກໍານົດລາຄາກາງໃນການປະກວດລາຄາ ເພື່ອຈັດຊື້ ກໍຄືການຄຸ້ມຄອງ, ກວດກາ ແລະ ປະເມີນຜົນໂຄງການ ແລະ ກິດຈະການລົງທຶນຕ່າງໆ ເປັນລະບົບ; ພ້ອມດຽວກັນນັ້ນ ກໍສົມທົບກັບກະຊວງ, ອົງການຕ່າງໆ ຄົ້ນຄວ້າອອກນະໂຍບາຍໃຫ້ບູລິມະສິດແກ່ບໍລິສັດພາຍໃນຂອງລາວ ໃຫ້ໄດ້ຮັບເໝົາບາງໂຄງການເງິນກູ້ຈາກສາກົນ ທີ່ມີເງື່ອນໄຂເໝາະສົມ.

17.5 ສົມທົບກັບບັນດາຂະແໜງການທີ່ກ່ຽວຂ້ອງ ເພື່ອທັບແລວເສດຖະກິດ ຕາເວັນອອກ-ຕາເວັນຕົກ, ເໜືອ-ໃຕ້ ໃຫ້ເປັນທາງເຊື່ອມໂຍງເສດຖະກິດຂົງເຂດ ແລະ ອະນຸພາກພື້ນ; ເອົາໃຈໃສ່ປັບປຸງເສັ້ນທາງໃຫ້ໄດ້ມາດຖານສາກົນ ເພື່ອຮອງຮັບການຂົນສົ່ງສິນຄ້າ, ການບໍລິການ, ການລົງທຶນ, ການທ່ອງທ່ຽວ ແລະ ອື່ນໆ.

17.6 ສົມທົບກັບ ທະບວງການປົກຄອງ ແລະ ຄຸ້ມຄອງລັດຖະກອນ, ອໍານາດການປົກຄອງນະຄອນຫຼວງ ແລະ ແຂວງ ປັບປຸງວຽກງານໂຍທາທິການ ແລະ ຂົນສົ່ງ ໃນບັນດາຕົວເມືອງ ໃຫ້ສອດຄ່ອງກັບສະພາບຄວາມເປັນຈິງໃນການຄຸ້ມຄອງຕົວເມືອງ. ສືບຕໍ່ພັດທະນາ ແລະ ຄຸ້ມຄອງບັນດາຕົວເມືອງໃຫ້ມີຄວາມເປັນລະບຽບຮຽບຮ້ອຍ, ສະອາດງາມຕາ ແລະ ມີສິ່ງແວດລ້ອມທີ່ດີ. ເອົາໃຈໃສ່ຈັດຕັ້ງປະຕິບັດໂຄງການນໍ້າປະປາໃນຕົວເມືອງຕ່າງໆໃຫ້ສໍາເລັດຕາມຄາດໝາຍ.

17.7 ສົມທົບກັບທະບວງການປົກຄອງ ແລະ ຄຸ້ມຄອງລັດຖະກອນ ແລະ ແຂວງກ່ຽວຂ້ອງ ຄົ້ນຄວ້າ, ປະເມີນຜົນການ ກໍ່ສ້າງເທດສະບານຂອງແຂວງ, ເມືອງຈໍານວນໜຶ່ງ(ເທດສະບານແຂວງ ວຽງຈັນ, ຜົ້ງສາລີ, ເຊໂປນ...).

**ມາດຕາ 18: ມອບໃຫ້ອົງການໄປສະນີ ແລະ ໂທລະຄົມແຫ່ງຊາດ ປະຕິບັດດັ່ງນີ້:**

18.1 ຂະຫຍາຍໄປສະນີ ຂັ້ນເມືອງຕື່ມອີກ 3 ແຫ່ງ ລວມທັງໝົດເປັນ 117 ແຫ່ງ, ລະດົມເງິນເຂົ້າສະຖາບັນເງິນຝາກປະຢັດໄປສະນີ ໃຫ້ໄດ້ 30 ຕື້ກວ່າກີບ ທຽບໃສ່ປີຜ່ານມາເພີ່ມຂຶ້ນ 11%.

18.2 ສືບຕໍ່ຂະຫຍາຍເຄືອຂ່າຍໂທລະຄົມມະນາຄົມສູ່ຊົນນະບົດໃນທົ່ວປະເທດ ແລະ ກໍ່ສ້າງສາຍໃຍແກ້ວໃຫ້ເພີ່ມຂຶ້ນ 15%, ຊຶ່ງກວມເອົາບັນດາແຂວງ 90% ແລະ ບັນດາເມືອງ 80%. ຕິດຕັ້ງສະຖານີໂທລະສັບມືຖືໃຫ້ໄດ້ 1.000 ແຫ່ງ.

18.3 ກໍ່ສ້າງສູນອິນເຕີເນັດແຫ່ງຊາດ ໃຫ້ສຳເລັດໃນຕົ້ນປີ 2010 ແລະ ລວມສູນການສື່ສານ ຂ່າວສານພາຍໃນປະເທດ ແລະ ເຊື່ອມໂຍງກັບສາກົນ.

**ມາດຕາ 19: ມອບໃຫ້ອົງການຄຸ້ມຄອງທີ່ດິນແຫ່ງຊາດ ປະຕິບັດດັ່ງນີ້:**

19.1 ສືບຕໍ່ສຳຫຼວດຈັດສັນທີ່ດິນ, ຈັດແບ່ງເຂດ, ແບ່ງປະເພດ; ສ້າງແຜນແມ່ບົດຈັດສັນທີ່ດິນແຫ່ງຊາດໃຫ້ສາມາດໃຊ້ໄດ້ໃນສົກປີ 2010-2011.

19.2 ຄຸ້ມຄອງ-ບໍລິຫານທີ່ດິນ, ປັບປຸງຂອດປະສານງານ ລະຫວ່າງ ອົງການຄຸ້ມຄອງທີ່ດິນ ແລະ ຂະແໜງການຄຸ້ມຄອງນຳໃຊ້ທີ່ດິນແຕ່ລະປະເພດ ເປັນຕົ້ນແມ່ນການນຳໃຊ້ທີ່ດິນກະສິກຳ, ທີ່ດິນຄົມມະນາຄົມ ແລະ ທີ່ດິນບໍ່ແຮ່ ໃຫ້ໄປຕາມເປົ້າໝາຍການລົງທຶນ ເພື່ອສ້າງມູນຄ່າທີ່ດິນໃຫ້ເພີ່ມຂຶ້ນ ແລະ ເຮັດໃຫ້ທີ່ດິນ ແລະ ຊັບພະຍາກອນທຳມະຊາດ ໄດ້ຮັບການຄຸ້ມຄອງເປັນຢ່າງດີ.

19.3 ປະສານສົມທົບ ກັບອຳນາດການປົກຄອງທ້ອງຖິ່ນ (ແຂວງ, ເມືອງ, ບ້ານ) ເກັບຄ່າທຳນຽມ ແລະ ຄ່າບໍລິການວິຊາການໃນການອອກ ແລະ ໂອນເອກະສານສິດນຳໃຊ້ທີ່ດິນ ໂດຍມີກົນໄກທີ່ຈະແຈ້ງ ແລະ ສ້າງຂໍ້ມູນສະຖິຕິເພື່ອເປັນພື້ນຖານໃຫ້ແກ່ການຂະຫຍາຍລາຍຮັບຈາກທີ່ດິນ. ປະຕິບັດໂຄງການຈັດສັນທີ່ດິນຈຸນລະພາກຂັ້ນບ້ານ-ກຸ່ມບ້ານ ແລະ ເມືອງ ໃນ 16 ເມືອງທຸກຍາກ ແຂວງລະ 1 ເມືອງທົ່ວປະເທດ ໃຫ້ສຳເລັດ ແລ້ວລາຍງານລັດຖະບານ.

**ມາດຕາ 20: ມອບໃຫ້ອົງການທ່ອງທ່ຽວແຫ່ງຊາດ ປະຕິບັດດັ່ງນີ້:**

20.1 ເພີ່ມທະວີການໂຄສະນາຂະຫຍາຍຕະຫລາດທ່ອງທ່ຽວຜ່ານສື່ຕ່າງໆທັງພາຍໃນ ແລະ ຕ່າງປະເທດ, ຈັດເທດສະການ, ງານຕະຫລາດນັດ ແລະ ຂະບວນຄາລາວານທ່ອງທ່ຽວ; ຂະຫຍາຍຕະຫລາດທ່ອງທ່ຽວພາຍໃນປະເທດ(ລາວທ່ອງທ່ຽວລາວ), ໃນອານຸພາກພື້ນ ແລະ ໃນໂລກ; ຈັບກາລະໂອກາດຂອງ 2 ເຫດການປະຫວັດສາດ ຄື: ງານມະຫາກຳກິລາຊີເກມ ແລະ ການສະເຫຼີມສະຫຼອງນະຄອນຫຼວງວຽງຈັນ ຄົບຮອບ 450 ປີ ເພື່ອໂຄສະນາເຜີຍແຜ່ໃຫ້ນາໆປະເທດຮູ້ຈັກປະເທດພວກເຮົາ ແລະ ສ້າງຄວາມສົນໃຈໃຫ້ແກ່ຊາວຕ່າງປະເທດເຂົ້າມາທ່ອງທ່ຽວຫຼາຍຂຶ້ນ ຊຶ່ງຈະມີຜົນໄດ້ຕໍ່ເສດຖະກິດໂດຍລວມຂອງປະເທດ.

20.2 ສົມທົບກັບກະຊວງການຕ່າງປະເທດ ຊີ້ນຳບັນດາສະຖານທູດ ແລະ ສະຖານກົງສູນລາວຢູ່ຕ່າງປະເທດເພື່ອຊ່ວຍເຫຼືອໃນການໂຄສະນາດຶງດູດນັກທ່ອງທ່ຽວ; ພ້ອມກັນນັ້ນ, ສົມທົບກັບກະຊວງການຕ່າງປະເທດ, ກະຊວງປ້ອງກັນຄວາມສະຫງົບ ຄົ້ນຄວ້າຫລຸດຄ່າທຳນຽມວີຊາ ຕາມຄວາມເໝາະສົມ, ອຳນວຍຄວາມສະດວກອອກວີຊາກັບທີ່ ຢູ່ດ່ານສາກົນຕ່າງໆ ລວມທັງການເດີນທາງເຂົ້າ-ອອກປະເທດ, ຈັດຕັ້ງການຕໍ່ວີຊາໃຫ້ນັກທ່ອງທ່ຽວຢູ່ແຂວງ, ຂະຫຍາຍຂອບເຂດການນຳໃຊ້ບັດຜ່ານແດນ

ສຳລັບນັກທ່ອງທ່ຽວທີ່ເຂົ້າມາເປັນກຸ່ມ ແລະ ຄົ້ນຄວ້າການຍົກເວັ້ນວີຊາໃຫ້ແກ່ພົນລະເມືອງປະເທດເພື່ອນມິດຈຳນວນໜຶ່ງຕື່ມ.

20.3 ສືບຕໍ່ສຳຫຼວດ, ຈັດສັນ ແລະ ພັດທະນາແຫຼ່ງທ່ອງທ່ຽວທາງທຳມະຊາດ, ປະຫວັດສາດ ແລະ ວັດທະນະທຳ. ກໍ່ສ້າງໂຄງລ່າງພື້ນຖານທ່ອງທ່ຽວໃຫ້ຫລາຍຂຶ້ນ, ໂດຍປຸກລະດົມອຳນາດການປົກຄອງທຸກຂັ້ນ, ປະຊາຊົນ ແລະ ທຸກພາກສ່ວນ ເອົາໃຈໃສ່ວຽກງານການທ່ອງທ່ຽວເຮັດໃຫ້ຂະແໜງນີ້ ປະກອບສ່ວນຢ່າງຕັ້ງໜ້າໃຫ້ແກ່ການເຕີບໂຕຂອງເສດຖະກິດ, ສ້າງລາຍໄດ້ ແລະ ລຶບລ້າງຄວາມທຸກຍາກຂອງປະຊາຊົນຢູ່ທ້ອງຖິ່ນ. ຂະຫຍາຍໂຄງການທ່ອງທ່ຽວທຳມະຊາດປະຊາຊົນມີສ່ວນຮ່ວມ ໃຫ້ກວມໝົດທຸກໆແຂວງໃນທົ່ວປະເທດ.

20.4 ສົມທົບກັບຂະແໜງການຕ່າງໆ, ສະມາຄົມທຸລະກິດທ່ອງທ່ຽວ, ສະມາຄົມໂຮງແຮມ-ຮ້ານອາຫານ, ສະມາຄົມຂົນສົ່ງ ເພື່ອປັບປຸງມາດຕະຖານການບໍລິການໃຫ້ຂຶ້ນສູ່ລະດັບສາກົນ ເຮັດໃຫ້ຄ່າບໍລິການການທ່ອງທ່ຽວສາມາດແກ່ງແຍ້ງໄດ້ ກັບຄ່າບໍລິການຂອງບັນດາປະເທດຢູ່ໃນອານຸພາກພື້ນ ແລະ ພາກພື້ນ.

**ມາດຕາ 21: ມອບໃຫ້ຄະນະປັບປຸງທຸລະກິດ ປະຕິບັດດັ່ງນີ້:**

21.1 ປະສານສົມທົບກັບບັນດາກະຊວງ-ອົງການ ແລະ ທ້ອງຖິ່ນ ປັບປຸງລະບົບການຈັດຕັ້ງ, ການຄຸ້ມຄອງການເງິນ ການບໍລິຫານທຸລະກິດ ແລະ ການຕະຫລາດຂອງລັດວິສາຫະກິດ, ວິສະຫະກິດປະສົມ ແລະ ທຸລະກິດຮ່ວມມືກັບປະຊາຊົນ ໃຫ້ເຂັ້ມແຂງສາມາດແກ່ງແຍ້ງຕາມກົນໄກຕະຫລາດ.

21.2 ປະສານສົມທົບກັບບັນດາກະຊວງ-ອົງການ, ທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງທຸກຂັ້ນ ສຶກສາອົບຮົມປຸກລະດົມ ພາກສ່ວນທຸລະກິດ ປະຕິບັດລະບຽບກົດໝາຍທຸລະກິດ, ກົດໝາຍບັນຊີ, ພາສີອາກອນ ແລະ ອື່ນໆ ຢ່າງເຂັ້ມງວດ.

21.3 ສົມທົບກັບກະຊວງການເງິນ, ກະຊວງອຸດສາຫະກຳ ແລະ ການຄ້າ, ທະນາຄານ ແລະ ອົງການທີ່ກ່ຽວຂ້ອງຄົ້ນຄວ້າ ວິທີແກ້ໄຂໜີ້ສິນທີ່ຊຸມເຄືອ ລະຫວ່າງລັດບໍລິຫານ ແລະ ທຸລະກິດ, ລະຫວ່າງທຸລະກິດກັບທຸລະກິດ ທີ່ແກ່ຍາວຫລາຍປີ ໃຫ້ສຳເລັດເທື່ອລະກ້າວ, ປັບປຸງຖານະການເງິນ ຂອງລັດວິສາຫະກິດໃຫ້ດີຂຶ້ນ ສາມາດກວດສອບໄດ້.

21.4 ປະສານສົມທົບກັບກະຊວງການເງິນ ເປັນເຈົ້າການ ຫັນຊັບສິນທີ່ລັດລົງທຶນໃຫ້ບໍລິສັດຂອງລັດສາມາດເປັນເຈົ້າຂອງບູລິມະສິດ ຢ່າງຂາດຕົວຕາມກົດໝາຍທຸລະກິດ. ກຽມທຸກເງື່ອນໄຂເຂົ້າຕະຫຼາດຫຼັກຊັບ.

21.5 ສ້າງລະບອບການລາຍງານວຽກງານທຸລະກິດ ໃຫ້ແກ່ລັດຖະບານປະຈຳ ໄຕມາດ ແລະ ປະຈຳປີ.

**ມາດຕາ 22: ມອບໃຫ້ກະຊວງສຶກສາທິການ ປະຕິບັດດັ່ງນີ້:**

22.1 ສືບຕໍ່ປະຕິບັດຂອບພັດທະນາການສຶກສາໃຫ້ເຂົ້າສູ່ລວງເລິກທາງດ້ານປະລິມານ ແລະ ຄຸນນະພາບ, ເປັນຕົ້ນແມ່ນ ການປະຕິຮູບຫລັກສູດການຮຽນ-ການສອນໃຫ້ຫຍັບໃກ້ກັບລະດັບສາກົນເທື່ອລະກ້າວ ໂດຍເນັ້ນໃສ່ການກໍ່ສ້າງ ແລະ ບຳລຸງຍົກລະດັບວິຊາສະເພາະໃຫ້ແກ່ຄູ່ນແຖວຄູ-ອາຈານ.

22.2 ປຸກລະດົມພາກສ່ວນທຸລະກິດເອກະຊົນ ໃຫ້ເຂົ້າຮ່ວມຢ່າງຕັ້ງໜ້າໃນການພັດທະນາວຽກງານການສຶກສາ ໂດຍສະເພາະວຽກງານອາຊີວະສຶກສາ ໃຫ້ມີບາດກ້າວກະໂດດຂັ້ນອັນໃໝ່ ສາມາດຮັບປະ

ກັນໄດ້ຄຸນນະພາບ ໃນລະດັບອັນແນ່ນອນ; ພ້ອມກັນນັ້ນ, ກໍສືບຕໍ່ກໍ່ສ້າງ ແລະ ຂະຫຍາຍພື້ນຖານໂຄງລ່າງທີ່ຈຳເປັນ ເພື່ອສ້າງເງື່ອນໄຂເອື້ອອຳນວຍໃຫ້ແກ່ວຽກງານການສຶກສາ.

22.3 ປະຕິບັດກົດໝາຍການສຶກສາ ຊັ້ນປະຖົມພາກບັງຄັບ, ເອົາໃຈໃສ່ການສຶກສາຊັ້ນອະນຸບານ, ການສຶກສານອກລະບົບເພື່ອລຶບລ້າງຄວາມບໍ່ຮູ້ໜັງສືໃຫ້ແກ່ກຸ່ມເປົ້າໝາຍ ແລະ ແຜນປະຕິບັດງານແຫ່ງຊາດການສຶກສາເພື່ອທຸກຄົນ; ປະຕິບັດນະໂຍບາຍຍົກຖານະບົດບາດຂອງຄູອາຈານໃຫ້ ມີລັກສະນະເດັ່ນຊັດຂຶ້ນກ່ວາເກົ່າໃນສັງຄົມ; ພ້ອມດຽວກັນນັ້ນ, ກໍປະຕິບັດນະໂຍບາຍອຸດໜູນຄູ-ອາຈານທີ່ປະຕິບັດໜ້າທີ່ ຢູ່ເຂດທຸລະກັນດານຫ່າງໄກສອກຫລີກ.

**ມາດຕາ 23: ມອບໃຫ້ກະຊວງສາທາລະນະສຸກ ປະຕິບັດດັ່ງນີ້:**

23.1 ປຸກລະດົມທົ່ວປວງຊົນໃຫ້ເຂົ້າຮ່ວມວຽກງານສາທາລະນະສຸກ ແລະ ຮັກສາສຸຂະພາບ, ຫັນເອົາວຽກງານສາທາລະນະສຸກ ລົງສູ່ຮາກຖານຫຼາຍຂຶ້ນ ໂດຍເລີ່ມຈາກການສ້າງບ້ານແບບຢ່າງສາທາລະນະສຸກ. ສ້າງໃຫ້ໄດ້ພະນັກງານທີ່ມີຈັນຍາທຳ, ທ່າທີຮັບໃຊ້ ແລະ ມີຄວາມຊຳນານງານ ທີ່ຈະລົງໄປປະຈຳຢູ່ໂຮງໝໍພາກ, ແຂວງ, ເມືອງ, ສຸກສາລາ ແລະ ກຸ່ມບ້ານຕ່າງໆ.

23.2 ສືບຕໍ່ປະຕິບັດການປິ່ນປົວ ປະເພດເສຍຄ່າ ແລະ ບໍ່ເສັຍຄ່າໃຫ້ສອດຄ່ອງກັບສະພາບຕົວຈິງ; ຮັບປະກັນຕິດຕາມຄຸ້ມຄອງ ແລະ ຊຸກຍູ້ສົ່ງເສີມພາກເອກະຊົນໃຫ້ມີບົດບາດປະກອບສ່ວນໃນວຽກງານປິ່ນປົວ ແລະ ຮັກສາສຸຂະພາບຂອງປະຊາຊົນ.

23.3 ແຕ່ລະໂຮງໝໍຕ້ອງເຊີດຊູຄວາມຮັບຜິດຊອບ ແລະ ເອົາໃຈໃສ່ໃຫ້ການຊ່ວຍເຫລືອປິ່ນປົວຜູ້ທຸກຍາກ, ຜູ້ທີ່ໄດ້ຮັບຜົນກະທົບຈາກວິກິດການ ແລະ ຜູ້ຕົກງານ. ໃຫ້ເລີ່ມດຳເນີນແຜນປັບປຸງກົນໄກບໍລິຫານໂຮງໝໍມະໂຫສົດ ແລະ ໂຮງໝໍຈຳນວນໜຶ່ງທີ່ມີເງື່ອນໄຂຫັນໄປສູ່ກົນໄກໃໝ່; ຄົ້ນຄວ້າອອກດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍນະໂຍບາຍສົ່ງເສີມການລົງທຶນໃນຂະແໜງສາທາລະນະສຸກ. ກະກຽມພາຫະນະ, ອຸປະກອນການແພດທີ່ຈຳເປັນ, ຕິດຕາມ ແລະ ເຝົ້າລະວັງການລະບາດ ຂອງພະຍາດຮ້າຍແຮງຕ່າງໆ ເປັນຕົ້ນ ພະຍາດໄຂ້ຫວັດໃຫຍ່ສາຍພັນໃໝ່ ປີ 2009; ຕັ້ງໜ້າປະກອບສ່ວນຮັບໃຊ້ງານມະຫາກຳກິລາຊີເກມ ເພື່ອສ້າງຄວາມເຊື່ອໝັ້ນໃຫ້ແກ່ນັກກິລາ ແລະ ນັກທ່ອງທ່ຽວ ທີ່ເຂົ້າມາຊົມການແຂ່ງຂັນ.

**ມາດຕາ 24: ມອບໃຫ້ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ ປະຕິບັດດັ່ງນີ້:**

24.1 ຄົ້ນຄວ້າປັບປຸງເນື້ອໃນສື່ໂຄສະນາ ໃຫ້ດີຂຶ້ນດ້ວຍຫຼາຍຮູບຫຼາຍສີ, ວ່ອງໄວທັນການ, ເປັນສື່ໃນການໃຫ້ຄວາມຮູ້ຄວາມເຂົ້າໃຈ ທັງມີລັກສະນະສຶກສາອົບຮົມໄປຕາມແນວທາງນະໂຍບາຍຂອງພັກ, ໃຫ້ຄວາມຮູ້ ແລະ ສາລະຫລາຍດ້ານ ເຊັ່ນ: ດ້ານລະບຽບກົດໝາຍ, ວິທະຍາສາດ ແລະ ວິຊາການຕ່າງໆ; ເອົາໃຈໃສ່ໂຄສະນາສົ່ງເສີມການຜະລິດສິນຄ້າໃຫ້ເປັນຂະບວນກວ້າງຂວາງ, ໂຄສະນາໃຫ້ນັກທ່ອງທ່ຽວເຂົ້າມາທ່ອງທ່ຽວໃນປະເທດ.

24.2 ປູກສ້າງແນວຄິດ ແລະ ຄວາມເຄີຍຊີນປະຢັດໃຫ້ເກີດຂຶ້ນຢ່າງແຜ່ຫຼາຍໃນສັງຄົມ. ຊຸກຍູ້ການປະຕິບັດໂຄງການກໍ່ສ້າງສະຖານີໂທລະພາບຊ່ອງ 3 ທີ່ມີກຳລັງແຮງສົ່ງ 200 ກິໂລວັດ ໃຫ້ສຳເລັດຕາມແຜນ ແລະ ທັນກັບການແຂ່ງຂັນມະຫາກຳກິລາຊີເກມ.

24.3 ເຜີຍແຜ່ແນະນຳວັດທະນາທຳຮີດຄອງປະເພນີ, ຄວາມຮັ່ງມີຂອງທຳມະຊາດ, ແຫລ່ງທ່ອງທ່ຽວ ເພື່ອດຶງດູດນັກທ່ອງທ່ຽວເຂົ້າປະເທດ ໂດຍສະເພາະງານມະຫາກຳກິລາຊີເກມ.

**ມາດຕາ 25: ມອບໃຫ້ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ປະຕິບັດດັ່ງນີ້:**

25.1 ເອົາໃຈໃສ່ຈັດຕັ້ງເຜີຍແຜ່ບັນດາກົດໝາຍ ແລະ ນິຕິກຳຕ່າງໆທີ່ກ່ຽວຂ້ອງກັບຂະແໜງແຮງງານໃຫ້ສັງຄົມຮັບຮູ້ຢ່າງກ້ວາງຂວາງ; ຄົ້ນຄວ້າ ແລະ ປະກາດໃຊ້ລະບຽບການຄຸ້ມຄອງແຮງງານຕ່າງດ້າວທີ່ເຮັດວຽກໃນ ສປປ ລາວ ພ້ອມທັງປະຕິບັດໃຫ້ເຂັ້ມງວດ. ຊຸກຍູ້ໃຫ້ຜູ້ລົງທຶນປະຕິບັດລະບຽບການໃຊ້ແຮງງານລາວ, ສົມທົບກັບສະຫະພັນກຳມະບານລາວລົງເຜີຍແຜ່ ແລະ ສຶກສາອົບຮົມກຳມະກອນຢູ່ໃນບັນດາໂຮງງານໃຫ້ເຂົາເຈົ້າເຂົ້າໃຈສະພາບຜົນກະທົບຂອງວິກິດການ.

25.2 ສົມທົບກັບກະຊວງການຕ່າງປະເທດຊີ້ນຳສະຖານທູດ ແລະ ສະຖານກົງສູນລາວຢູ່ຕ່າງປະເທດ ເພີ່ມຄວາມເອົາໃຈໃສ່ຕໍ່ການຕິດຕາມ, ຄຸ້ມຄອງຊ່ວຍເຫລືອແຮງງານລາວຢູ່ຕ່າງປະເທດ; ສ້າງບົດວິພາກຄວາມຕ້ອງການແຮງງານ.

25.3 ຄົ້ນຄວ້າ ແລະວິໄຈກ່ຽວກັບການເຄື່ອນຍ້າຍແຮງງານ ແລະ ຄວາມອາດສາມາດ ດຸນດ່ຽງແຮງງານໃນລະບົບເສດຖະກິດ, ສ້າງສູນຂໍ້ມູນຂ່າວສານ ແລະ ສູນບໍລິການຈັດຫາງານຢູ່ບັນດາຕົວເມືອງໃຫຍ່.

25.4 ອອກມາດຕະການຄຸ້ມຄອງຄົນ ແລະ ແຮງງານຕ່າງປະເທດທີ່ເຂົ້າມາທຳມາຫາກິນຢູ່ ສປປ ລາວ ຢ່າງເຂັ້ມງວດ.

25.5 ຄົ້ນຄວ້າປະຕິບັດນະໂຍບາຍ ຕໍ່ຜູ້ທີ່ມີຜົນງານຕໍ່ການປະຕິວັດ, ຜູ້ອອກກິນເບັ້ຍບຳນານໃຫ້ດີ ແລະຖືກຕ້ອງທ່ຽງທຳ.

**ມາດຕາ 26: ມອບໃຫ້ຄະນະກຳມະການກິລາແຫ່ງຊາດ ປະຕິບັດດັ່ງນີ້:**

ຈັດຕັ້ງງານມະຫະກຳກິລາຊີເກມ ຄັ້ງທີ່ 25 ທີ່ປະເທດເຮົາເປັນເຈົ້າພາບ ໃນທ້າຍປີ 2009 ໃຫ້ໄດ້ຮັບຜົນສຳເລັດເປັນຢ່າງດີ, ປຸກລະດົມໃຫ້ພາກລັດ, ເອກະຊົນ ແລະ ຊັ້ນຄົນຕ່າງໆ ເຮັດໜ້າທີ່ເປັນເຈົ້າພາບທີ່ດີ ເພື່ອສ້າງຄວາມປະທັບໃຈໃຫ້ແກ່ຄະນະນັກກິລາ ແລະ ນັກທ່ອງທ່ຽວ ທີ່ເຂົ້າມາຮ່ວມການແຂ່ງຂັນ ແລະ ທ່ຽວຊົມ, ທັງໃຫ້ມີລັກສະນະຟົດຟື້ນຂອງບັນຍາກາດການແຂ່ງຂັນ, ທັງເສີມສ້າງມິດຕະພາບອັນດີຂອງບັນດາປະຊາຊາດ ອາຊີຕາເວັນອອກສ່ຽງໃຕ້.

**ມາດຕາ 27: ມອບໃຫ້ອົງການວິທະຍາສາດ ແລະ ເຕັກໂນໂລຊີແຫ່ງຊາດ ປະຕິບັດດັ່ງນີ້:**

27.1 ສືບຕໍ່ປັບປຸງຮ່າງດຳລັດວ່າດ້ວຍການຄ້າທາງເອເລັກໂຕຼນິກ, ສືບຕໍ່ຮ່າງດຳລັດວ່າດ້ວຍການຖ່າຍທອດເຕັກໂນໂລຊີ, ຄົ້ນຄວ້າພັດທະນາການປູກພືດດ້ວຍເນື້ອເຍື່ອ, ການເພາະລ້ຽງເຊື້ອໃສ່ພືດ, ໂດຍສະເພາະໄມ້ເກດສະໜາເພື່ອເປັນສິນຄ້າສະໜັບສະໜູນແຜນງານລຶບລ້າງຄວາມທຸກຍາກ, ຄົ້ນຄວ້າ ແລະ ພັດທະນານ້ຳມັນໝາກເຍົາ, ພະລັງງານຊີວະພາບ, ພະລັງງານທົດແທນອື່ນໆ ແລະ ຄົ້ນຄວ້າເຕັກໂນໂລຊີນຳໃຊ້ພະລັງງານປະຫຍັດ.

27.2 ສົມທົບກັບມະຫາວິທະຍາໄລແຫ່ງຊາດ ແລະ ສະຖາບັນຄົ້ນຄ້ວາວິທະຍາສາດດຳເນີນ ໂຄງການຄົ້ນຄວ້າວິທະຍາສາດການນຳໃຊ້ ສຳລັບຂະແໜງ ທີ່ເຫັນວ່າເໝາະສົມ ສຳລັບປະເທດເຮົາ, ໃນນີ້ ນັບທັງໂຄງການຮ່ວມມືຄົ້ນຄວ້າກັບສາກົນ, ໂຄງການກໍ່ສ້າງນັກຄົ້ນຄວ້າໃນດ້ານຕ່າງໆທັງຢູ່ພາຍໃນ ແລະຕ່າງປະເທດ.

27.3 ສ້າງແຜນລະດົມແຫຼ່ງທຶນເຂົ້າໃນການຄົ້ນຄວ້າວິທະຍາສາດ-ເຕັກນິກ ຈາກພາຍໃນ ສົມທົບກັບການຍາດແຍ່ງການຊ່ວຍເຫຼືອຈາກຕ່າງປະເທດ; ສ້າງແຜນນຳໃຊ້ຜົນສຳເລັດດ້ານວິທະຍາສາດ ຂອງໂລກເຂົ້າໃນການພັດທະນາ. ເອົາວຽກງານຊັບສິນທາງປັນຍາ, ມາດຖານ ແລະ ວັດແທກເຂົ້າຮັບໃຊ້

ສັງຄົມ ແລະ ປະຊາຊົນໃຫ້ນັບມື້ກວ້າງຂວາງ, ສືບຕໍ່ປະສານສົມທົບ ແລະ ຮ່ວມມືກັບອົງການມາດຕະຖານສາກົນ ແລະ ອົງການມາດຕະຖານຂອງພາກພື້ນເພື່ອປັບປຸງວຽກງານມາດຕະຖານ ແລະ ຄຸນນະພາບ ຢູ່ ສປປ ລາວ. ຍາດແຍ່ງການຮ່ວມມືຊ່ວຍເຫຼືອວຽກງານວັດແທກໄລຍະ II ຈາກຕ່າງປະເທດ.

27.4 ຄົ້ນຄ້ວາພັດທະນາ, ນຳໃຊ້ ແລະ ສົ່ງເສີມການນຳໃຊ້ ເຕັກໂນໂລຊີຂໍ້ມູນຂ່າວສານ(IT) ເຂົ້າໃນການພັດທະນາແຕ່ລະຂະແໜງການ, ໂດຍສະເພາະການປະຕິບັດໂຄງການບໍລິຫານລັດແບບເອເລັກໂທນິກໄລຍະ I ໃຫ້ສຳເລັດ ພ້ອມທັງກະກຽມການມອບຮັບ ແລະ ປະຕິບັດໂຄງການໄລຍະ II. ເອົາໃຈໃສ່ກະກຽມຊຸກຍູ້ການຮ່ວມມື ປະຕິບັດໂຄງການດາວທຽມລາວຮ່ວມມືກັບ ສປ.ຈີນ ທີ່ຂັ້ນເທິງຕົກລົງແລ້ວໃຫ້ສຳເລັດ.

27.5 ສືບຕໍ່ປັບປຸງສະພາວິທະຍາສາດແຫ່ງຊາດ ແລະ ຫ້ອງການສະພາ ເພື່ອມີຄວາມສາມາດພິຈາລະນາຮັບຮອງນະໂຍບາຍ ແລະ ໝາກຜົນຂອງການຄົ້ນຄວ້າດ້ານວິທະຍາສາດ ຈາກສະຖາບັນ ຫຼື ບຸກຄົນນັກຄົ້ນຄວ້າ ໃນຫົວຂໍ້ສຳຄັນຕ່າງໆ.

**ມາດຕາ 28: ມອບໃຫ້ອົງການຊັບພະຍາກອນນໍ້າ ແລະ ສິ່ງແວດລ້ອມ ປະຕິບັດດັ່ງນີ້:**

28.1 ສືບຕໍ່ປັບປຸງກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ, ກົດໝາຍວ່າດ້ວຍນໍ້າ ແລະ ຊັບພະຍາກອນນໍ້າ, ສ້າງ ແລະ ປະກາດໃຊ້ມາດຖານ ຄຸນນະພາບສິ່ງແວດລ້ອມ, ເຜີຍແຜ່ບັນດານິຕິກຳຕ່າງໆທີ່ກ່ຽວຂ້ອງກັບວຽກງານຊັບພະຍາກອນນໍ້າ ແລະ ສິ່ງແວດລ້ອມ; ດຳເນີນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມຂອງບັນດາໂຄງການຕ່າງໆ ແລະ ຕິດຕາມກວດກາການປະຕິບັດມາດຕະການຫຼຸດຜ່ອນຜົນກະທົບ ຕໍ່ດ້ານສິ່ງແວດລ້ອມ ແລະ ສັງຄົມຈາກດ້ານຕ່າງໆ.

28.2 ຄຸ້ມຄອງຊັບພະຍາກອນນໍ້າແບບປະສົມປະສານ, ຢູ່ເຂດອ່າງນໍ້າງື່ມ, ນໍ້າເທີນ, ນໍ້າກະດິງ, ນໍ້າຕອນ, ນໍ້າຊັນ, ນໍ້າເຊໂດນ ແລະ ອື່ນໆ; ສ້າງລະບົບການເຕືອນລະວັງໄພພິບັດທຳມະຊາດ; ສ້າງຍຸດທະສາດ ແລະ ແຜນດຳເນີນງານກ່ຽວກັບການປ່ຽນແປງດິນຟ້າອາກາດ ເພື່ອເຊື່ອມເຂົ້າແຜນພັດທະນາເສດຖະກິດ-ສັງຄົມ ຄັ້ງທີ VII. ຮ່ວມມືກັບບັນດາປະເທດອານຸພາກພື້ນແມ່ນໍ້າຂອງ ແລະ ຄະນະກຳມະການແມ່ນໍ້າຂອງສາກົນ.

28.3 ປູກສ້າງຈິດສຳນຶກຂອງປວງຊົນ ກ່ຽວກັບການປົກປັກຮັກສາສິ່ງແວດລ້ອມ ເປັນຕົ້ນ ແມ່ນການຮັກສາແຫຼ່ງນໍ້າ ແລະ ການຈຳກັດມົນລະພິດ. ຕິດຕາມ ແລະ ພະຍາກອນສະພາບອາກາດອອກຂ່າວເປັນປົກກະຕິ, ສະໜອງຂໍ້ມູນອຸຕຸການບິນເປັນປົກກະຕິຕໍ່ເນື່ອງ.

28.4 ພິຈາລະນາຜ່ານໂຄງການລົງທຶນ ທີ່ກ່ຽວຂ້ອງກັບສິ່ງແວດລ້ອມ ຢ່າງວ່ອງໄວ ແລະ ສ້າງມາດຕະຖານສິ່ງແວດໃຫ້ຄົບຊຸດ.

**ມາດຕາ 29: ມອບໃຫ້ກະຊວງປ້ອງກັນປະເທດ-ກະຊວງປ້ອງກັນຄວາມສະຫງົບ ປະຕິບັດດັ່ງນີ້:**

29.1 ເອົາໃຈໃສ່ວຽກງານປ້ອງກັນຊາດ, ປ້ອງກັນຄວາມສະຫງົບ ແນໃສ່ເຮັດໃຫ້ທົ່ວປະເທດມີຄວາມສະຫງົບຢ່າງໜັກແໜ້ນ ສ້າງສະພາບແວດລ້ອມທີ່ອຳນວຍໃຫ້ການສ້າງສາພັດທະນາເສດຖະກິດ-ສັງຄົມ ໃນທຸກພື້ນທີ່ຂອງປະເທດ, ປຸກລະດົມຂົນຂວາຍ ແລະ ຈັດຕັ້ງມະຫາຊົນເຂົ້າຮ່ວມວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຢູ່ຮາກຖານ ຢ່າງກວ້າງຂວາງ.

29.2 ເປັນເຈົ້າການປະສານສົມທົບກັບຄະນະພັກ-ອຳນາດການປົກຄອງທຸກຂັ້ນ ເຮັດວຽກງານປ້ອງກັນຊາດ ແລະ ປ້ອງກັນຄວາມສະຫງົບ ເພື່ອໃຫ້ທຸກຂະແໜງການ ແລະ ທ້ອງຖິ່ນ ເຂົ້າຮ່ວມໃນການຮັກສາສະຖຽນລະພາບ ດ້ານການເມືອງ, ຮັກສາຄວາມສະຫງົບເປັນລະບຽບຮຽບຮ້ອຍໃນສັງຄົມ; ປະຕິບັດໂຄງການພັດທະນາຈຸດສຸມ 6 ໂຄງການ ແລະ ໂຄງການລຽບຊາຍແດນ ໃຫ້ມີປະສິດທິຜົນ.

29.3 ແກ້ໄຂປະກົດການຫຍໍ້ທໍ້ໃນສັງຄົມ ເປັນຕົ້ນແມ່ນ ບັນຫາຢາເສບຕິດ, ອາຊະຍາກຳຕ່າງໆ, ອຸປະຕິເຫດບົນທ້ອງຖະໜົນ ແລະ ການມົ້ວສຸມຜິດລະບຽບກົດໝາຍ ໂດຍມີມາດຕະການປະຕິບັດ ຢ່າງລະອຽດ ແລະ ເດັດຂາດ.

29.4 ປະຕິບັດການຮັກສາຄວາມປອດໄພ, ຄວາມເປັນລະບຽບຮຽບຮ້ອຍ ໃນງານແຂ່ງຂັນມະຫາກຳກິລາຊີເກມ ແລະ ງານບຸນໃຫຍ່ແຫ່ງຊາດ ໂດຍຮັບປະກັນໃຫ້ມີຄວາມສະຫງົບ ປອດໄພ 100%.

**ມາດຕາ 30: ມອບໃຫ້ກະຊວງຍຸຕິທຳ ປະຕິບັດດັ່ງນີ້:**

30.1 ສົມທົບກັບບັນດາກະຊວງທີ່ກ່ຽວຂ້ອງ ຄົ້ນຄວ້າເພື່ອສ້າງ ແລະ ປັບປຸງກົດໝາຍ ແລະ ນິຕິກຳອື່ນໆທີ່ຈະນຳເຂົ້າຜ່ານກອງປະຊຸມສະໄໝສາມັນຂອງສະພາແຫ່ງຊາດຊຸດທີ VI ເທື່ອທີ 8 ແລະ ເທື່ອທີ 9; ເພີ່ມທະວີການໂຄສະນາເຜີຍແຜ່ກົດໝາຍ ຢ່າງເປັນລະບົບ ແລະ ກວ້າງຂວາງ ແນໃສ່ເຮັດໃຫ້ທົ່ວສັງຄົມຮັບຮູ້, ເຂົ້າໃຈດີຂຶ້ນ ແລະ ມີສະຕິເຄົາລົບກົດໝາຍສູງຂຶ້ນ, ເຮັດໃຫ້ການຈັດຕັ້ງປະຕິບັດກົດໝາຍ ມີຄວາມເປັນເອກະພາບໃນທົ່ວປະເທດ ແລະ ມີຄວາມສັກສິດຂຶ້ນ; ພ້ອມກັນນີ້, ກໍໃຫ້ຈັດຕັ້ງການກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ທີ່ໄດ້ປະກາດໃຊ້ແລ້ວ.

30.2 ສົມທົບກັບອົງການຄຸ້ມຄອງກົດໝາຍ ປັບປຸງແບບແຜນວິທີເຮັດວຽກ ແລະ ຈັນຍາທຳຂອງພະນັກງານແນໃສ່ສ້າງຄວາມເຊື່ອໝັ້ນຂອງສັງຄົມ ຕໍ່ອົງການປົກປ້ອງກົດໝາຍແຕ່ລະຂັ້ນໃຫ້ນັບມື້ນັບສູງ, ຍົກສູງຄວາມຖືກຕ້ອງ ໃນການຕັດສິນຄະດີ ຄຽງຄູ່ກັບການເພີ່ມຄວາມສັກສິດ ແລະ ເດັດຂາດໃນການປະຕິບັດຄຳຕັດສິນ ຂອງສານ.

**ມາດຕາ 31: ມອບໃຫ້ຄະນະກຳມະການກວດກາຂັ້ນສູນກາງ ແລະ ອົງການກວດສອບແຫ່ງລັດປະຕິບັດດັ່ງນີ້:**

31.1 ເພີ່ມທະວີການກວດກາ ແລະ ກວດສອບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ການປະຕິບັດຮ່ວງລາຍຮັບ ແລະ ລາຍຈ່າຍຕ່າງໆ ຂອງງົບປະມານແຫ່ງລັດ ຂອງບັນດາກະຊວງ, ອົງການ, ນະຄອນຫຼວງ ແລະ ແຂວງ ລົງຮອດຂັ້ນ ເມືອງ ແລະ ບ້ານ ເພື່ອຮັບປະກັນໃຫ້ການປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນລາຍຮັບ-ລາຍຈ່າຍໄປຕາມແຜນການທີ່ສະພາແຫ່ງຊາດ ໄດ້ອະນຸມັດ ແລ້ວລາຍງານໃຫ້ລັດຖະບານເປັນແຕ່ລະໄລຍະ. ປະຕິບັດມາດຕະການເຂັ້ມງວດໃນການຕ້ານການສໍ້ລາດບັງຫລວງ ແລະ ເອົາໃຈໃສ່ການຄົ້ນຄວ້າແກ້ໄຂຄຳຮ້ອງທຸກຂໍຄວາມເປັນທຳຂອງປະຊາຊົນ.

31.2 ກວດກາຄວາມຖືກຕ້ອງໃນການຈັດຕັ້ງ ແລະ ການນຳໃຊ້ທຶນຂອງບັນດາກອງທຶນຕ່າງໆ ທີ່ຂະແໜງການສູນກາງ ແລະ ທ້ອງຖິ່ນສ້າງຕັ້ງຂຶ້ນ ເພື່ອເຮັດໃຫ້ລາຍຮັບ ແລະ ລາຍຈ່າຍລວມສູນຜ່ານບັນຊີງົບປະມານແຫ່ງລັດຕາມກົດໝາຍກຳນົດໄວ້ ແລະ ເພື່ອເສີມຂະຫຍາຍ ຄຸນປະໂຫຍດຂອງແຫຼ່ງທຶນຕ່າງໆຂຶ້ນຕື່ມອີກ.

**ມາດຕາ 32: ມອບໃຫ້ກະຊວງການປົກຄອງ ແລະ ຄຸ້ມຄອງລັດຖະກອນ ປະຕິບັດດັ່ງນີ້:**

32.1 ຄົ້ນຄວ້າປັບປຸງກົດໝາຍວ່າດ້ວຍລັດຖະບານ ແລະ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ລວມທັງຄົ້ນຄວ້າປັບປຸງນະໂຍບາຍ ແລະ ມາດຕະການຕ່າງໆ ໃນການຜັນຂະຫຍາຍບັນດາກົດຫມາຍດັ່ງກ່າວ, ການແບ່ງ ແລະ ມອບສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບ ລະຫວ່າງສູນກາງ ແລະ ທ້ອງຖິ່ນໃຫ້ສອດຄ່ອງ, ລະອຽດຈະແຈ້ງ ໃນການຄຸ້ມຄອງເສດຖະກິດ-ສັງຄົມ.

32.2 ຄົ້ນຄວ້າ ແລະ ປັບປຸງ ດຳລັດກ່ຽວກັບນະໂຍບາຍຕໍ່ພະນັກງານ-ລັດຖະກອນ ທີ່ປະຕິບັດໜ້າທີ່ວຽກງານຢູ່ເຂດຫ່າງໄກສອກຫລີກ-ທຸລະກັນດານ ແລະ ກະກຽມທຸກເງື່ອນໄຂປະກາດສ້າງຕັ້ງເທດສະບານແຂວງຫລວງພະບາງ.

**ມາດຕາ 33: ມອບໃຫ້ຄະນະເລຂາທິການລັດຖະບານ ປະຕິບັດດັ່ງນີ້:**

33.1 ເປັນໃຈກາງປະສານກັບບັນດາຂະແໜງການ ແລະ ທ້ອງຖິ່ນ ດຳເນີນການກວດກາຄືນໂດຍໄວບັນດານິຕິກຳ ເປັນຕົ້ນແມ່ນ ຄຳສັ່ງ ແລະ ລະບຽບການຕ່າງໆຂອງລັດຖະບານ, ຂອງກະຊວງ-ອົງການ ແລະ ຂອງທ້ອງຖິ່ນ, ຖ້າຫາກເຫັນວ່າອັນໃດບໍ່ສອດຄ່ອງກັບນະໂຍບາຍ, ລະບຽບການ ຫລື ກົດໝາຍທີ່ວາງອອກ ໃຫ້ຮີບຮ້ອນປັບປຸງແກ້ໄຂ, ງົດການປະຕິບັດ ຫລື ລົບລ້າງ.

33.2 ປັບປຸງລະບອບປະສານງານ ໃນການແກ້ໄຂບັນຫາຕ່າງໆລະຫວ່າງກະຊວງ, ອົງການ ດ້ວຍກັນ ແລະ ລະຫວ່າງກະຊວງ-ອົງການ ກັບ ທ້ອງຖິ່ນ ເພື່ອໃຫ້ມີຄວາມກົມກຽວ ເປັນເອກະພາບ ແລະ ເກີດກຳລັງແຮງສັງລວມໃນການແກ້ໄຂບັນຫາຕ່າງໆ ເຮັດໃຫ້ການປະຕິບັດທິດທາງ ແລະ ມາດຕະການຕ່າງໆທີ່ວາງອອກໃຫ້ມີຄວາມສັກສິດ.

33.3 ຊ່ວຍລັດຖະບານໃນການຕິດຕາມ ຊຸກຍູ້ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ ສົກປີ 2009-2010, ການປະຕິບັດບັນດາທິດທາງ ແລະມາດຕະການຂອງລັດຖະບານເພື່ອແກ້ໄຂຜົນກະທົບຈາກວິກິດການການເງິນຂອງໂລກ ແລະ ຊຸກຍູ້ການເຕີບໂຕຂອງເສດຖະກິດແຫ່ງຊາດ ຢ່າງຕໍ່ເນື່ອງ.

**ມາດຕາ 34: ມອບໃຫ້ບັນດາກະຊວງ, ອົງການຂັ້ນສູນກາງ, ນະຄອນຫຼວງ ແລະ ແຂວງ ປະຕິບັດດັ່ງນີ້:**

34.1 ບັນດາກະຊວງ, ອົງການ, ນະຄອນຫຼວງ ແລະ ແຂວງ ຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ແລະ ແຜນການລົງທຶນຂອງລັດຂອງຕົນໃຫ້ສຳເລັດ ເພື່ອຮັບປະກັນການບັນລຸບັນດາຄາດໝາຍຕ່າງໆຂອງແຜນພັດທະນາເສດຖະກິດ-ສັງຄົມ ກໍຄືຄາດໝາຍດ້ານລາຍຮັບ-ລາຍຈ່າຍແຜນງົບປະມານຂອງລັດ. ພ້ອມກັນນັ້ນ, ຄຸ້ມຄອງກວດກາແຜນລາຍຈ່າຍງົບປະມານໃຫ້ໄປຕາມແຜນການທີ່ສະພາແຫ່ງຊາດອະນຸມັດ, ປະຕິບັດຢ່າງມີຈຸດສຸມ ບົນຈິດໃຈປະຢັດມັດທະຍັດ, ຖືກຕ້ອງຕາມຈຸດປະສົງເປົ້າໝາຍ ແລະ ບໍ່ປະຕິບັດເກີນແຜນ ຫລື ນອກແຜນອະນຸມັດເດັດຂາດ.

34.2 ບັນດາກະຊວງ, ອົງການ, ນະຄອນຫຼວງ ແລະ ແຂວງ ອີງໃສ່ພາລະບົດບາດຂອງຕົນ ຄົ້ນຄວ້າສ້າງວິທີການ ແລະ ມາດຕະການທີ່ລະອຽດ ສອດຄ່ອງກັບນະໂຍບາຍ ແລະ ກົດໝາຍຕ່າງໆ ເພື່ອສ້າງເງື່ອນໄຂລະດົມ ແລະ ສົ່ງເສີມທຸກພາກສ່ວນເສດຖະກິດ ເຂົ້າຮ່ວມໃນການລົງທຶນຜະລິດສິນຄ້າ ແລະ ບໍລິການ.

34.3 ນະຄອນຫລວງ ແລະ ແຂວງຕ່າງໆ ຈັດເກັບລາຍຮັບທີ່ເປັນພູດຂອງທ້ອງຖິ່ນໃຫ້ໄດ້ຕາມແຜນ ຫລື ລື່ນແຜນ, ພ້ອມກັນນັ້ນ ກໍອໍານວຍຄວາມສະດວກໃຫ້ແກ່ການເກັບລາຍຮັບຂອງ 3 ຂະແໜງການ ສາຍຕັ້ງທີ່ຂຶ້ນກັບກະຊວງການເງິນ ເພື່ອໃຫ້ການເກັບລາຍຮັບພູດຂອງສູນກາງໃຫ້ບັນລຸຕາມແຜນ ຫລື ລື່ນແຜນ.

34.4 ຂະແໜງການ, ທ້ອງຖິ່ນ, ບຸກຄົນໃດໜຶ່ງບໍ່ສາມາດ ຫຼຸດຜ່ອນ ຫຼື ຍົກເວັ້ນພາສີອາກອນ ແລະ ຄ່າທໍານຽມທຸກປະເພດທີ່ບໍ່ເປັນໄປຕາມລະບຽບກົດໝາຍຕາມລໍາພັງ; ທຸກການຍົກເວັ້ນດັ່ງກ່າວນັ້ນ ແມ່ນລັດຖະບານເປັນຜູ້ຕົກລົງ ໂດຍຜ່ານການຄົ້ນຄວ້າສະເໜີຂອງກະຊວງການເງິນ ຖ້າຂະແໜງການໃດ ຫຼື ທ້ອງຖິ່ນໃດຫາກຝ່າຝືນ ແມ່ນຈະຖືກພິຈາລະນາດ້ານວິໄນຢ່າງເຂັ້ມງວດ. ຫ້າມບຸກຄົນ ແລະ ການຈັດຕັ້ງເກັບຄ່າທໍານຽມ ແລະ ຄ່າບໍລິການ ທີ່ບໍ່ນອນຢູ່ໃນລະບຽບກົດໝາຍ. ບັນດາຂະແໜງການ ແລະ ທ້ອງຖິ່ນ ກ່ອນຈະອະນຸມັດເຊັນສັນຍາປະຕິບັດໂຄງການຕ່າງໆ ຕ້ອງໄດ້ຄໍານຶງເຖິງລະບຽບກົດໝາຍກ່ຽວກັບພາສີ, ສ່ວຍສາອາກອນ ແລະ ກົດໝາຍກ່ຽວກັບການສົ່ງເສີມການລົງທຶນ.

34.5 ນະຄອນຫຼວງ ແລະ ທ້ອງຖິ່ນ ຄົ້ນຄ້ວາຂຶ້ນໂຄງການຈັດສັນພູມລໍາເນົາ ແລະ ບ່ອນທໍາມາຫາກິນຖາວອນໃຫ້ປະຊາຊົນ ໂດຍມີການຈັດລະດັບຄວາມສໍາຄັນ ແລະ ຄວາມຈໍາເປັນ ຫລື ລະດັບບູລິມະສິດ ຢ່າງຈະແຈ້ງ ສົ່ງໃຫ້ລັດຖະບານ ເພື່ອສ້າງເປັນແຜນກວມລວມທົ່ວປະເທດໃນແຕ່ລະສົກປີ.

## ມາດຕາ 35: ວິທີຈັດຕັ້ງປະຕິບັດ.

35.1 ມອບໃຫ້ກະຊວງແຜນການ ແລະ ການລົງທຶນ ແລະ ກະຊວງການເງິນ ອີງໃສ່ດໍາລັດສະບັບນີ້ອອກແຈ້ງການ ແລະ ບົດແນະນໍາລະອຽດ ເຖິງບັນດາກະຊວງ, ອົງການທຽບເທົ່າ, ນະຄອນຫລວງ ແລະ ແຂວງຕ່າງໆ ເພື່ອຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ແລະ ແຜນການລົງທຶນຂອງລັດ ປະຈໍາສົກປີ 2009-2010.

35.2 ມອບໃຫ້ຂະແໜງການ ສ້າງບົດແນະນໍາ ກ່ຽວກັບວິທີຈັດຕັ້ງປະຕິບັດດໍາລັດສະບັບນີ້ ແລະ ສ້າງແຜນດໍາເນີນງານລະອຽດດ້ານວິຊາສະເພາະທີ່ກ່ຽວຂ້ອງຂອງຕົນນັບແຕ່ສູນກາງລົງຮອດທ້ອງຖິ່ນ ສໍາລັບສົກປີ 2009-2010.

35.3 ມອບໃຫ້ກະຊວງແຜນການ ແລະ ການລົງທຶນ ແລະ ກະຊວງການເງິນ ສົມທົບກັບຂະແໜງການ ແລະ ທ້ອງຖິ່ນຕ່າງໆ ເປັນເຈົ້າການໂຄສະນາເຜີຍແຜ່ກ່ຽວກັບທິດທາງ, ໜ້າທີ່, ຄາດໝາຍ ແລະ ວຽກງານຈຸດສຸມຂອງແຜນພັດທະນາເສດຖະກິດ-ສັງຄົມ ແລະ ຄາດໝາຍຂອງແຜນງົບປະມານແຫ່ງລັດ, ປຸກລະດົມ ອົງການຈັດຕັ້ງຂອງລັດທຸກຂັ້ນ, ອົງການຈັດຕັ້ງມະຫາຊົນ, ທຸກພາກສ່ວນເສດຖະກິດ ແລະ ຊັ້ນຄົນຕ່າງໆ ເຂົ້າຮ່ວມໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ.

## ມາດຕາ 36: ກ່ຽວກັບການປະຕິບັດລະບອບລາຍງານ ໃຫ້ປະຕິບັດດັ່ງນີ້:

36.1 ໃຫ້ກະຊວງ, ອົງການ, ນະຄອນຫລວງ ແລະ ແຂວງ ສະຫລຸບລາຍງານການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ແລະ ແຜນການລົງທຶນຂອງລັດ ສົກປີ 2009-2010 ແລ້ວປະຕິບັດລະບອບລາຍງານ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍງົບປະມານ, ດໍາລັດ 135/ນຍ ວ່າດ້ວຍການສ້າງ ແລະ ຄຸ້ມຄອງແຜນພັດທະນາເສດຖະກິດ-ສັງຄົມ ແລະ ດໍາລັດ 58/ນຍ ວ່າດ້ວຍການຄຸ້ມຄອງການລົງທຶນຂອງລັດ.

36.2 ໃຫ້ກະຊວງແຜນການ ແລະ ການລົງທຶນ ສະຫລຸບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ສົກປີ 2009-2010, ກະຊວງການເງິນ ສະຫລຸບການຈັດຕັ້ງແຜນງົບປະມານແຫ່ງລັດ ສົກປີ 2009-2010 ແລ້ວລາຍງານຕໍ່ລັດຖະບານ.

36.3 ໃຫ້ທະນາຄານແຫ່ງ ສປປ ລາວ ສະຫລຸບລາຍງານກ່ຽວກັບການດຸ່ນດ່ຽງ ແລະ ຄຸ້ມຄອງນະໂຍບາຍການເງິນ-ເງິນຕາ ຂອງການປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ສົກປີ 2009-2010 ຕໍ່ລັດຖະບານ.

36.4 ໃຫ້ອົງການກວດກາລັດຖະບານ ແລະ ອົງການກວດສອບແຫ່ງລັດ ດຳເນີນການກວດກາ ແລະ ກວດສອບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ ຕາມພາລະບົດບາດຂອງຕົນ ແລ້ວສະຫລຸບລາຍງາຍຕໍ່ລັດຖະບານ.

**ມາດຕາ 37: ກ່ຽວກັບການກະກຽມສ້າງແຜນການ ສົກປີ 2010-2011:**

37.1 ອີງໃສ່ດຳລັດສະບັບນີ້ ມອບໃຫ້ກະຊວງແຜນການ ແລະ ການລົງທຶນ, ກະຊວງການເງິນ ແລະ ກະຊວງກ່ຽວຂ້ອງ ອອກແຈ້ງການ ແລະ ບົດແນະນຳ ເຖິງກະຊວງ, ອົງການ, ນະຄອນຫລວງ ແລະ ແຂວງຕ່າງໆ ເພື່ອສ້າງຮ່າງແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ແລະ ແຜນການລົງທຶນຂອງລັດ ສົກປີ 2010-2011 ໂດຍໃຫ້ອີງໃສ່ໝາກຜົນ ແລະ ຂໍ້ຄົງຄ້າງໃນການຈັດຕັ້ງປະຕິບັດແຜນການໃນໄລຍະຜ່ານມາ, ກົດໝາຍງົບປະມານ, ດຳລັດ 135/ນຍ ວ່າດ້ວຍການສ້າງ ແລະ ຄຸ້ມຄອງແຜນພັດທະນາເສດຖະກິດ-ສັງຄົມ, ດຳລັດ 58/ນຍ ວ່າດ້ວຍການຄຸ້ມຄອງການລົງທຶນຂອງລັດ ສົມທົບໃສ່ຍຸດທະສາດການພັດທະນາຂະແໜງການ ຫຼື ທ້ອງຖິ່ນຕົນ, ຈຸດພິເສດ, ທ່າແຮງ ແລະ ກາລະໂອກາດຂອງຂະແໜງການ ແລະ ທ້ອງຖິ່ນຕົນ ເພື່ອນຳສະເໜີລັດຖະບານ ແລະ ສະພາແຫ່ງຊາດພິຈາລະນາ.

37.2 ໃຫ້ທຸກກະຊວງ, ອົງການ, ນະຄອນຫຼວງ ແລະ ແຂວງ ຮ່າງແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VII(2011-2015) ຕາມຄຳສັ່ງແນະນຳຂອງນາຍົກລັດຖະມົນຕີ.

**ມາດຕາ 38:** ມອບໃຫ້ທ່ານລັດຖະມົນຕີວ່າການກະຊວງ, ຫົວໜ້າອົງການ, ທ່ານເຈົ້າຄອງນະຄອນຫຼວງ ແລະ ທ່ານເຈົ້າແຂວງ ຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດດຳລັດສະບັບນີ້ຢ່າງເຂັ້ມງວດ ແລະ ລາຍງານຜົນຂອງການຈັດຕັ້ງປະຕິບັດ ໃຫ້ລັດຖະບານ ໃນແຕ່ລະໄລຍະຢ່າງເປັນປົກກະຕິ.

**ມາດຕາ 39:** ດຳລັດສະບັບນີ້ ມີຜົນບັງຄັບໃຊ້ນັບແຕ່ວັນທີ 1 ຕຸລາ 2009 ເປັນຕົ້ນໄປ.

**ນາຍົກລັດຖະມົນຕີແຫ່ງ ສປປ ລາວ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ນາຍົກລັດຖະມົນຕີ

**ບົວສອນ ບຸບຜາວັນ**